# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


**I. ສະພາບການພົ້ນເດັ່ນຂອງພາກພື້ນ ແລະ ສາກົນ.........................................ໜ້າ 01 – 10**

**II. ການເຄື່ອນໄຫວວຽກງານ ຂອງການນຳພັກ ປປ ລາວ.....................................ໜ້າ 11 - 12**

**III. ການເຄື່ອນໄຫວຂອງຄະນະນຳ ຄະນະພົວພັນຕ່າງປະເທດສູນກາງພັກ.....................ໜ້າ 12 – 15**


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ປະຈຳເດືອນ **ພະຈິກ 2021**


**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Fax 021 414043, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງພາກພື້ນ ແລະ ສາກົນ

**1. ສະພາບການພົ້ນເດັ່ນຢູ່ ສປປ ລາວ**

**1). ສະຖານະການໂຄວິດ-19**

ປະຊາຊົນລາວທົ່ວປະເທດ ຍັງສືບຕໍ່ປະຕິບັດຄຳສັ່ງ ສະບັບເລກທີ 15/ນຍ, ລົງວັນທີ 21/04/2021 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກະກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19. ໃນເດືອນ ພະຈິກ 2021 ການລະບາດຂອງພະຍາດໂຄວິດ-19 ຍັງສືບຕໍ່ເພີ່ມຂຶ້ນ ໃນຊຸມຊົນ ໂດຍສະເພາະແມ່ນຢູ່ບັນດາແຂວງທີ່ມີປະຊາກອນໜາແໜ້ນ ພົ້ນເດັ່ນແມ່ນນະຄອນຫຼວງວຽງຈັນ ທີ່ມີຜູ້ຕິດເຊື້ອຫຼາຍທີ່ສຸດໃນປະເທດ. ພ້ອມກັນນັ້ນ, ແຂວງຫົວພັນ ຜ່ານມາເປັນແຂວງດຽວ ທີ່ບໍ່ມີການຕິດເຊື້ອ ປັດຈຸບັນ ໄດ້ມີລາຍງານຜູ້ຕິດເຊື້ອແລ້ວຈຳນວນ 143 ຄົນ. ຮອດວັນທີ 30 ພະຈິກ 2021, ທົ່ວປະເທດ ມີຜູ້ຕິດເຊື້ອສະສົມ 72,447 ເພີ່ມຂຶ້ນ 31,247 ຄົນ; ປິ່ນປົວຫາຍດີ 60,849 ຄົນເພີ່ມຂຶ້ນ 27,404 ຄົນ; ກຳລັງປິ່ນປົວຢູ່ໂຮງໝໍ 11,598 ຄົນ, ເສຍຊີວິດສະສົມທັງໝົດ 166 ຄົນ; ປະຊາຊົນລາວ ທີ່ໄດ້ສັກວັກແຊງຄົບ 2 ເຂັມ 3,164,005 ຄົນ, ໄດ້ສັກເຂັມທີໜຶ່ງ 3,891,037 ຄົນ. ພ້ອມກັນນັ້ນ, ຂະແໜງສາທາລະນະສຸກ ໄດ້ສືບຕໍ່ເລັ່ງສັກວັກແຊງປ້ອງກັນ COVID-19 ຄົບ 2 ເຂັມ ໃຫ້ປະຊາຊົນທົ່ວປະເທດຢ່າງໜ້ອຍ 50% ໃນທ້າຍປີ 2021.

**2). ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX**

ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ດຳເນີນແຕ່ວັນທີ 1-17 ພະຈິກ 2021, ໃຊ້ເວລາທັງໝົດ 15 ວັນ ເຊິ່ງກອງປະຊຸມຄັ້ງນີ້ໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດ ໂດຍໄດ້ອອກເປັນມະຕິກອງປະຊຸມ ດັ່ງນີ້: 1) ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2021 ແລະ ແຜນການ ປະຈຳປີ 2022; 2) ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ, ແຜນເງິນຕາ ປະຈຳປີ 2021 ແລະ ແຜນການ ປະຈຳປີ 2022; 3) ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບແຜນພັດທະນາພະລັງງານໄຟຟ້າ ຂອງ ສປປ ລາວ (2021-2030) ແລະ ແຜນພັດທະນາພະລັງງານໄຟຟ້າ ແລະ ບໍ່ແຮ່ 5 ປີ (2021-2025); 4) ມະຕິວ່າດ້ວຍການຮັບຮອງເອົາ ບົດລາຍງານຂອງລັດຖະບານ ກ່ຽວກັບວິໄສທັດ 20 ປີ (2021-2040), ຍຸດທະສາດ 10 ປີ (2021-2030) ແລະ ແຜນພັດທະນາເສດຖະກິດດີຈີຕອນແຫ່ງຊາດ 5 ປີ (2021-2025); 5) ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການກວດສອບແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ແຜນການ ປະຈຳປີ 2022; ຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2020; 6) ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການກວດກາແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ແຜນການປະຈຳປີ 2022; ການກວດກາ ຕາມຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2019; 7) ມະຕິວ່າດ້ວຍການຮັບຮອງເອົາ ບົດລາຍງານຂອງສານປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ແຜນການປະຈຳປີ 2022; 8) ມະຕິວ່າດ້ວຍການຮັບຮອງເອົາການສະເໜີແຕ່ງຕັ້ງສະມາຊິກສະພາຜູ້ພິພາກສາ ຂອງສານປະຊາຊົນສູງສຸດ; 9) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ແຜນການ ປະຈຳປີ 2022; 10) ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ແຜນການ ປະຈຳປີ 2022; 11) ມະຕິ ວ່າດ້ວຍການຮັບຮອງເອົາກົດໝາຍຈຳນວນ 11 ສະບັບ. ໃນນີ້ມີກົດໝາຍສ້າງໃໝ່ 4 ສະບັບ ຄື: ຮ່າງກົດໝາຍວ່າດ້ວຍຍານພາຫະນະທາງບົກ; ຮ່າງກົດໝາຍວ່າດ້ວຍຊາຍແດນແຫ່ງຊາດ; ຮ່າງກົດໝາຍວ່າດ້ວຍເຕັກໂນໂລຊີລະດັບສູງ; ຮ່າງກົດໝາຍ ວ່າດ້ວຍການສຳຫຼວດວັດແທກ ແລະ ສ້າງແຜນທີ່. ກົດໝາຍປັບປຸງ 7 ສະບັບ ຄື: ກົດໝາຍວ່າດ້ວຍລັດຖະບານ; ກົດ ໝາຍວ່າດ້ວຍງົບປະມານແຫ່ງລັດ; ກົດໝາຍວ່າດ້ວຍການສ້າງນິຕິກຳ; ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ; ກົດໝາຍ ວ່າດ້ວຍການຄວບຄຸມຢາສູບ; ກົດໝາຍວ່າດ້ວຍໂທລະຄົມມະນາຄົມ; ກົດໝາຍວ່າດ້ວຍມໍລະດົກແຫ່ງຊາດ;

**3). ກອງປະຊຸມໃຫຍ່ ຂອງບັນດາອົງການຂັ້ນສູນກາງ**

- ວັນທີ 9/11/2021, ສະຫະພັນນັກຮົບເກົ່າແຫ່ງຊາດລາວ ໄດ້ໄຂກອງປະຊຸມໃຫຍ່ຜູ້ແທນນັກຮົບເກົ່າທົ່ວປະເທດຄັ້ງທີ IV ພາຍໃຕ້ການເປັນປະທານຂອງສະຫາຍ ພົຈວ ສົມພອນ ແກ້ວມີໄຊ, ປະທານສະຫະພັນນັກຮົບເກົ່າແຫ່ງຊາດລາວ ໃຫ້ກຽດເຂົ້າຮ່ວມໂດຍ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດແຫ່ງ ສປປ ລາວ, ສະຫາຍ ພົອ ຈັນສະໝອນ ຈັນຍາລາດ, ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນປະເທດ ແລະ ຜູ້ແທນຈາກສູນກາງ ແລະ ທ້ອງຖິ່ນເຂົ້າຮ່ວມ. ກອງປະຊຸມໄດ້ຜ່ານຮ່າງບົດສະຫຼຸບລາຍງານ, ຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຂອງຜູ້ແທນນັກຮົບເກົ່າທົ່ວປະເທດຄັ້ງທີ III ໃນໄລຍະ 5 ປີຜ່ານມາ (2016-2020) ແລະ ວາງທິດທາງແຜນການໃນໄລຍະ 5 ປີຕໍ່ໜ້າ (2021-2025). ພ້ອມກັນນັ້ນ, ກອງປະຊຸມ ຍັງໄດ້ຜ່ານມະຕິຕົກລົງຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການອະນຸມັດລາຍຊື່ບຸກຄະລາກອນ ເພື່ອພິຈາລະນາຮັບຮອງເຂົ້າໃນຄະນະບໍລິຫານງານສະຫະພັນນັກຮົບເກົ່າແຫ່ງຊາດລາວ ສະໄໝທີ IV ຈຳນວນ 27 ສະຫາຍ, ຍິງ 1 ສະຫາຍ ແລະ ໄດ້ຮັບຮອງເອົາການແຕ່ງຕັ້ງ ສະຫາຍ ພົທ ແສງນວນ ໄຊຍະລາດ ເປັນປະທານຄະນະບໍລິຫານງານ, ສະຫາຍ ພົຈວ ຄຳຫອມ ບົວລົມ, ສະຫາຍ ພົຈວ ລຳພອນ, ສະຫາຍ ພົຈວ ຄຳໝັ້ນ ວັນນະວົງ ແລະ ສະຫາຍ ພົຈວ ພອນໃຈ ພັນທະວົງ ເປັນຮອງປະທານຄະນະບໍລິຫານງານ, ສະຫາຍ ພົຈວ ຄຳໝັ້ນ ວັນນະວົງ ເປັນປະທານກວດກາ, ສະຫາຍ ພັອ ນາງ ຄຳພູ ສິດທິເສນ ເປັນຮອງປະທານກວດກາ.

- ອົງການໄອຍະການປະຊາຊົນສູງສຸດ ໄດ້ໄຂກອງປະຊຸມໃຫຍ່ ສະມາຊິກພັກ ຄັ້ງທີ V ໂດຍການເປັນປະທານຂອງ ສະຫາຍ ໄຊຊະນະ ໂຄດພູທອນ, ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເປັນກຽດເຂົ້າຮ່ວມຂອງ ສະຫາຍ ນາງ ປານີ ຢາທໍ່ຕູ້, ກຳມະການກົມການເມືອງສູນກາງພັກ, ຮອງປະທານປະເທດ ແຫ່ງ ສປປ ລາວ. ກອງປະຊຸມ ໄດ້ຜ່ານບົດລາຍງານການເມືອງ, ແຜນພັດທະນາວຽກງານໄອຍະການ, ຜ່ານບົດສຳຫລວດນຳພາລວມຂອງຄະນະບໍລິຫານງານພັກຊຸດເກົ່າ ແລະ ຮັບຮອງເອົາມະຕິກອງປະຊຸມໃຫຍ່ສະມາຊິກພັກ ອົງຄະນະພັກ ອົງການໄອຍະການປະຊາຊົນສູງສຸດ ຄັ້ງທີ V. ພ້ອມນີ້, ກອງປະຊຸມໄດ້ປ່ອນບັດຄັດເລືອກເອົາ ຄະນະບໍລິຫານງານພັກ ອົງການໄອຍະການປະຊາຊົນສູງສຸດ ຊຸດໃໝ່ 9 ສະຫາຍ, ຍິງ 2 ສະຫາຍ, ໃນນັ້ນໄດ້ເລືອກເອົາ ສະຫາຍ ໄຊຊະນະ ໂຄດພູທອນ ເປັນເລຂາຄະນະບໍລິຫານງານພັກ ແລະ ເລືອກເອົາ ສະຫາຍ ບຸນທັນ ບຸນທະວີໄລ ເປັນຮອງເລຂາ ທັງເປັນປະທານກວດກາພັກ.

**2. ສະພາບການພາກພື້ນ ແລະ ສາກົນ**

**1) ສະພາບການລະບາດຂອງເຊື້ອພະຍາດ ໂຄວິດ - 19 ໃນທົ່ວໂລກ**

ພະຍາດໂຄວິດ-19 ຍັງສືບຕໍ່ລະບາດ ຢູ່ພາກພື້ນຕ່າງໆຂອງໂລກ. ເຂດທີ່ລະບາດຫຼາຍທີ່ສຸດ ແມ່ນຢູ່ໃນອາຊີ ແລະ ເອີຣົບຕາເວັນອອກ. ໃນຂະນະດຽວກັນ ຊຶ່ງເຂດເອີຣົບ ກໍກັບມາລະບາດຮອບໃໝ່, ເຊິ່ງ WHO ຄາດຄະເນວ່າ ເອີລົບ ຈະມີປະມານ 53 ປະເທດ ອາດມີຜູ້ເສຍຊີວິດໃໝ່ອີກ 700.000 ຄົນຈາກ COVID-19 ໃນລະດູໃບໄມ້ປົ່ງ ປີ 2022 ຍ້ອນການແຜ່ລະບາດສາຍພັນ Delta, ຫຼາຍປະເທດໃນເອີລົບໄດ້ຜ່ອນຄາຍມາດຕະການກັກກັນພື້ນຖານເຊັ່ນ: ການໃສ່ໜ້າກາກ ແລະ ການຢູ່ຫ່າງທາງສັງຄົມ ແລະ ມີຫຼາຍຄົນບໍ່ໄດ້ຮັບການສັກຢາວັກແຊງ. ພ້ອມກັນນັ້ນ, ອົງການສຸຂະພາບ Pan-American (PAHO) ໄດ້ເຕືອນວ່າ ອາເມລິກາເໜືອ ອາດຈະປະເຊີນກັບການລະບາດຂອງ COVID-19 ຄືກັບ ໃນ ເອີຣົບ ເຖິງ 23%, PAHO ໄດ້ຮຽກຮ້ອງໃຫ້ປະຊາຊົນປະຕິບັດລະບຽບຢ່າງເຂັ້ມງວດດ້ວຍການໃສ່ໜ້າກາກ ແລະ ຮັກສາໄລຍະຫ່າງທາງສັງຄົມ. ສ່ວນ ບັນດາປະເທດອາຊຽນ ກໍມີທ່າອ່ຽງເພີ່ມຂຶ້ນໃໝ່ ພາຍຫຼັງທີ່ເຢັນລົງມາໄລຍະໜຶ່ງ, ແຕ່ຈຳນວນຜູ້ເສຍຊີວິດໂດຍລວມແມ່ນຫຼຸດລົງເລັກນ້ອຍ, ປະເທດທີ່ມີຕົວເລກຜູ້ຕິດເຊື້ອສູງໃນອາຊຽນ ແມ່ນ ໄທ, ມາເລເຊຍ, ຫວຽດນາມ ແລະ ຟີລິບປິນ. ຂະນະດຽວກັນ, ນັກວິທະຍາສາດໃນອາຟຣິກາໃຕ້ໄດ້ຄົ້ນພົບເຊື້ອໄວຣັສກາຍພັນຊະນິດໃໝ່ SARS-CoV-2 ໃນອາຟຣິກາ ອາດມີອັດຕາການຕິດເຊື້ອສູງ. ຫຼາຍປະເທດ ຍັງສືບຕໍ່ເລັ່ງການສັກວັກແຊງໃຫ້ພົນລະເມືອງຂອງຕົນ, ໃນນັ້ນ ອິນໂດເນເຊຍ ໄດ້ປະກາດວ່າ ຈະໃຫ້ເຄິ່ງໜຶ່ງຂອງປະຊາກອນທັງໝົດ 135,4 ລ້ານຄົນ ໄດ້ຮັບວັກແຊງຢ່າງໜ້ອຍ 1 ເຂັມ. ປະຊາກອນອີຣານເຄິ່ງໜຶ່ງ 44,2 ລ້ານຄົນ ໄດ້ຮັບການສັກວັກແຊງປ້ອງກັນພະຍາດໂຄວິດ-19 ຄົບ 2 ເຂັມແລ້ວ, ຫຼາຍກວ່າ 12,2 ລ້ານຄົນໄດ້ຮັບວັກແຊງ 1 ເຂັມ. ປະຊາກອນອາເມລິກາ ໄດ້ຮັບວັກແຊງຢ່າງໜ້ອຍ 1 ຄັ້ງ ກວ່າ 229.837.421 ຄົນ, 196.128.496 ຄົນ ໄດ້ຮັບວັກແຊງຄົບຊຸດ. ສ.ເກົາຫລີ ສັກວັກແຊງໃຫ້ປະຊາຊົນ ເຂັມທີ 1 ໄດ້ 81,7% ແລະ ເຂັມທີ 2 ໄດ້ 40,1%. ປະຊາກອນອິດສະຕຣາລີ 88% ຂອງຜູ້ມີອາຍຸ 16 ປີຂຶ້ນໄປ ໄດ້ຮັບສັກວັກແຊງຄົບ. ປະມານ 75,8% ຂອງ

ປະຊາກອນ 1,4 ຕື້ຄົນຂອງ ສປ ຈີນ ໄດ້ສຳເລັດການສັກຢາວັກແຊງ ແລະ ຍັງມີຜູ້ມີສິດໄດ້ຮັບການສັກວັກແຊງເສີມອີກດ້ວຍ.

**2) ສະພາບການໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກາ**

ການພົບປະສຸດຍອດ ລະຫວ່າງ ທ່ານ ສີ ຈິ້ນຜິງ, ຜູ້ນຳ ສປ ຈີນ ແລະ ທ່ານ ໂຈ ໄບເດັນ, ຜູ້ນຳອາເມລິກາ ໃນວັນທີ 16 ພະຈິກ 2021 ເປັນການພົບປະສຸດຍອດຄັ້ງທຳອິດ ນັບຕັ້ງແຕ່ ທ່ານ ໂຈ ໄບເດັນ ໄດ້ຮັບຕຳແໜ່ງເປັນປະທານາທິບໍດີສະຫະລັດ ອາເມລິກາ ໃນຕົ້ນປີ 2021 ເປັນຕົ້ນມາ. ການພົບປະຄັ້ງນີ້ ເກີດຂຶ້ນໃນທ່າມກາງສອງປະເທດ ກຳລັງມີຄວາມຂັດແຍ່ງໃນຫຼາຍບັນຫາ ເປັນຕົ້ນແມ່ນ ບັນຫາເຂດປົກຄອງຕົນເອງໄຕຫວັນ ຂອງ ຈີນ, ບັນຫາທະເລຈີນໃຕ້, ການໂຈມຕີທາງໄຊເບີ້ ທີ່ອາເມລິກາ ກ່າວຫາວ່າ ຈີນ ເປັນຜູ້ຢູ່ເບື້ອງຫຼັງ ແລະ ການທີ່ ອາມລິກາ ສະແດງຄວາມກັງວົນ ໃນການພັດທະນາອາວຸດນິວເຄລຍ ແລະ ການເພີ່ມຄັງອາວຸດຢ່າງໄວວາ ຂອງກອງທັບຈີນ ແລະ ບັນຫາອື່ນໆ.

ການພົບປະສຸດຍອດຄັ້ງນີ້ ຖືເປັນການສະແດງໃຫ້ປະຊາຄົມໂລກເຫັນວ່າ ສອງປະເທດມະຫາອຳນາດ ພວມປະຕິບັດຕາມຄຳໝັ້ນສັນຍາຂອງຕົນ ໃນການຮ່ວມກັນຕ້ານການປ່ຽນແປງສະພາບດິນຟ້າອາກາດ ກໍຄືການຈຳກັດ ການປ່ອຍອາຍກາກໂບນິກ ສູ່ອາກາດ ທີ່ໄດ້ໃຫ້ໄວ້ ໃນກອງປະຊຸມສະຫະປະຊາຊາດ ວ່າດ້ວຍການປ່ຽນແປງດິນຟ້າອາກາດ ທີ່ນະຄອນ Glasgow ໃນວັນທີ 14 ພະຈິກ 2021 ຜ່ານມາ, ທັງເປັນການສ້າງບັນຍາກາດການພົວພັນທີ່ດີ ເພື່ອນຳໄປສູ່ການຮ່ວມມືດ້ານເສດຖະກິດ, ການຄ້າ ທີ່ຈະເປັນພື້ນຖານ ໃນການຟື້ນຟູເສດຖະກິດໂລກ ພາຍຫຼັງໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ຕັ້ງແຕ່ທ້າຍປີ 2019 ຈົນຮອດປັດຈຸບັນ. ໃນການພົບປະ, ທ່ານ ສີ ຈິ້ນຜິງ ໄດ້ກ່າວວ່າ ໃນຖານະທີ່ ຈີນ ແລະ ອາເມລິກາ ຕ່າງກໍ່ເປັນສະມາຊິກຂອງສະພາຄວາມໝັ້ນຄົງສະຫະປະຊາຊາດ ແລະ ມີຂະໜາດເສດຖະກິດໃຫຍ່ທີ່ສຸດໃນໂລກ, ພວກເຮົາ ຈຳເປັນຕ້ອງເພີ່ມທະວີການພົວພັນຮ່ວມມື ລວມທັງການຮ່ວມມືດ້ານຄວາມໝັ້ນຄົງ ໃນນັ້ນສອງປະເທດ ຕ່າງກໍ່ດຳເນີນກິດຈະການພາຍໃນໃຫ້ດີ ໃນຂະນະດຽວກັນກໍຕ້ອງສະແດງຄວາມຮັບຜິດຊອບຕໍ່ສາກົນ ເພື່ອຮັບມືກັບຄວາມທ້າທາຍຕ່າງໆ ເຊັ່ນ: ສະພາບການປ່ຽນແປງຂອງດິນຟ້າອາກາດ, ການຕ້ານກັບພະຍາດ ໂຄວິດ-19 ແລະ ອື່ນໆ ເພື່ອສັນຕິພາບ ແລະ ການພັດທະນາຂອງໂລກຢ່າງແທ້ຈິງ; ທ່ານ ສີ ຈິ້ນຜິງ ໄດ້ເນັ້ນໜັກ 3 ຫຼັກການ ໃນການພົວພັນ ຈີນ-ອາເມລິກາ ໃນສັງກາດໃໝ່ ຄື: ຈີນ ແລະ ອາເມລິກາ ຄວນເຄົາລົບເຊິ່ງກັນ ແລະ ກັນ, ຢູ່ຮ່ວມກັນໂດຍສັນຕິ, ສະແຫວງຫາຄວາມຮ່ວມມືແບບຕ່າງຝ່າຍ ຕ່າງມີຜົນປະໂຫຍດ, ພ້ອມທັງຮຽກຮ້ອງໃຫ້ອາເມລິກາ ກັບມາດຳເນີນນະໂຍບາຍກັບ ສປ ຈີນ ຢ່າງຖືກຕ້ອງ ແລະ ວ່າ ສປ ຈີນ ພ້ອມທີ່ຈະຮ່ວມມືກັບອາເມລິກາໃນທຸກດ້ານ. ສ່ວນ ທ່ານ ໂຈ ໄບເດັນ ໄດ້ກ່າວວ່າ ທັງອາເມລິກາ ແລະ ຈີນ ລ້ວນແຕ່ເປັນມະຫາອຳນາດຂອງໂລກ, ຕ້ອງມີຄວາມຮັບຜິດຊອບ ທີ່ສາມາດຮັບປະກັນວ່າ ການແຂ່ງຂັນຂອງພວກເຮົາ ຈະບໍ່ນຳໄປສູ່ຄວາມຂັດແຍ່ງ ແລະ ໄດ້ໃຫ້ຄຳໝັ້ນສັນຍາກັບ ສປ ຈີນ 3 ຂໍ້ ຄື: ລັດຖະບານອາເມລິກາ ຈະບໍ່ສະໜັບສະໜູນກຳລັງປະຊາທິປະໄຕ ໃນໄຕຫວັນ ແລະ ຈະບໍ່ພະຍາຍາມປ່ຽນແປງລະບົບຫຼັກການຈີນດຽວ; ຈະບໍ່ຊອກຫາພັນທະມິດ ເພື່ອຕ້ານ ຈີນ; ບໍ່ໄດ້ມີຈຸດປະສົງ ເພື່ອປະທະກັບຈີນ. ໃນຂະນະທີ່ ທ່ານ ສີ ຈິ້ນຜິງ ໄດ້ສະແດງຄວາມຫວັງວ່າ ອາເມລິກາ ຈະປະຕິບັດຕາມການໃຫ້ສັນຍາດັ່ງກ່າວ ເພື່ອບໍ່ໃຫ້ເກີດສົງຄາມເຢັນ ຄັ້ງໃໝ່.

ວັນທີ 5 – 11 ພະຈິກ 2021, ທ່ານ ນາງ Marise Payne, ລັດຖະມົນຕີຕ່າງປະເທດ ອົດສະຕຣາລີ ໄດ້ຢ້ຽມຢາມ 4 ປະເທດສະມາຊິກ ອາຊຽນ ເພື່ອພົບປະກັບຄູ່ຮ່ວມຕຳແໜ່ງຕາມລຳດັບ ຄື: ວັນທີ 5 – 7/11/ 2021, ຢ້ຽມຢາມ ມາເລເຊຍ, ເຂົ້າຮ່ວມກອງປະຊຸມວຽກງານຕ່າງປະເທດ ລະຫວ່າງ ອົດສະຕຣາລີ - ມາເລເຊຍ ຄັ້ງທີ 6, ປຶກສາຫາລືກ່ຽວກັບການຮ່ວມມືສອງຝ່າຍ, ບັນຫາພາກພື້ນ ແລະ ອື່ນໆ; ວັນທີ 7 – 8/11/2021, ຢ້ຽມຢາມ ກຳປູເຈຍ ໄດ້ປຶກສາຫາລືການຮ່ວມມືທາງດ້ານເສດຖະກິດ-ການຄ້າ, ຄວາມໝັ້ນຄົງ, ການສຶກສາ, ກະສິກຳ ແລະ ວຽກງານປ້ອງກັນພະຍາດໂຄວິດ - 19, ເຊິ່ງຝ່າຍອົດສະຕຣາລີ ຢືນຢັນ ຈະສະໜອງຢາວັກຊີນຈຳນວນ 1 ລ້ານໂດສ ໃຫ້ ກຳປູເຈຍ ພາຍໃນທ້າຍປີ 2021 ໃນຈຳນວນທັງໝົດ 2.35 ລ້ານໂດສ; ແລະ ຊ່ວຍ 232 ລ້ານໂດລາອົດສະຕຣາລີ ຜ່ານໂຄງການຮ່ວມມືແມ່ນ້ຳຂອງ ເພື່ອພັດທະນາ ກຳປູເຈຍ; ຢ້ຽມຢາມ ຫວຽດນາມ ວັນທີ 8- 9/11/ 2021, ໄດ້ປຶກສາຫາລືການຮ່ວມມືຫຼາຍບັນຫາ ເປັນຕົ້ນ ດ້ານເສດຖະກິດ, ຄວາມໝັ້ນຄົງ, ການປ້ອງກັນ-ສະກັດກັ້ນການລະບາດ ຂອງພະຍາດ COVID-19, ແລກປ່ຽນບັນຫາພາກພື້ນ ແລະ ສາກົນ, ພ້ອມນັ້ນ ລັດຖະມົນຕີຕ່າງປະເທດອົດສະຕຣາລີ ຮ່ວມກັບຜູ້ຕາງໜ້າອົງການ UNICEF ປະຈຳ ຫວຽດນາມ ໄດ້ມອບຕູ້ເກັບຮັກສາວັກຊີນ 1,910 ໜ່ວຍ, ເຂັມສັກຢາ 5 ລ້ານເຂັມ, ຕູ້ນິລະໄພ 50,000 ໜ່ວຍ ໃຫ້ຫວຽດນາມ, ແລະ ຈະສະໜອງວັກຊີນປ້ອງກັນ COVID-19 ແກ່ຫວຽດນາມ ຕື່ມ 2.7 ລ້ານໂດສ ຈາກທັງຫມົດ 7.8 ລ້ານໂດສ; ວັນທີ 10 – 11/11/2021, ຢ້ຽມຢາມ ອິນ

ໂດເນເຊຍ ເພື່ອເພີ່ມທະວີການຮ່ວມມື ຂອງສອງປະເທດໃນທຸກຂົງເຂດ ເປັນຕົ້ນດ້ານເສດຖະກິດ-ການຄ້າ, ການສຶກສາ, ຄວາມໝັ້ນຄົງ ແລກປ່ຽນບັນຫາຍຸດທະສາດອິນໂດ-ປາຊີຟິກ ແລະ ອື່ນໆ; ການຢ້ຽມຢາມຂົງເຂດ ອາຊຽນ ຄັ້ງນີ້ ຂອງລັດຖະມົນຕີຕ່າງປະເທດອົດສະຕຣາລີ, ເວົ້າລວມແມ່ນ ເພື່ອແນໃສ່ເສີມຂະຫຍາຍການຮ່ວມມືໃນທຸກຂົງເຂດ ຕາມທິດຄູ່ເຈລະຈາ ອາຊຽນ - ອົດສະຕຣາລີ, ແລະ ເປັນການແລກປ່ຽນຄໍາຄິດເຫັນກ່ຽວກັບບັນຫາ ຂໍ້ຕົກລົງຄວາມໝັ້ນຄົງ 3 ຝ່າຍ ອົດສະຕຣາລີ, ອັງກິດ ແລະ ອາເມລິກາ (the trilateral security pact between Australia, the United Kingdom and the United States – AUKUS) ປະກາດໃນວັນທີ 15/9/2021, ເຊິ່ງຝ່າຍອົດສະຕຣາລີ ຍອມຮັບຈະບໍ່ໃຫ້ບັນຫາດັ່ງກ່າວກະທົບຕໍ່ການຮ່ວມມື ລະຫວ່າງ ອົດສະຕຣາລີ - ອາຊຽນ ກໍ່ຄືບັນຫາສັນຕິພາບໃນພາກພື້ນ.

ວັນທີ 09/11/2021, ສະມາຊິກສະພາ ຂອງ ອາເມລິກາ 02 ທ່ານ ໄດ້ຢ້ຽມຢາມໄຕຫວັນ ດ້ວຍຍົນທະຫານ, ເປັນການສ້າງຄວາມເຊື່ອໝັ້ນ ແລະ ເປັນການປະສານງານຂອງສອງຝ່າຍ ເພື່ອສົ່ງເສີມປະຊາທິປະໄຕໃນໄຕຫວັນ. ຂະນະດຽວກັນ, ສປ ຈີນ ໄດ້ຄັດຄ້ານ ແລະ ປະນາມການກະທໍາດັ່ງກ່າວ ຍ້ອນເປັນການແຊກແຊງກິດຈະການພາຍໃນຂອງ ຈີນ ແລະ ໄດ້ສົ່ງເຄື່ອງບິນຮົບ J – 16 ຈໍານວນ 4 ລໍາ, ເຄື່ອງບິນສອດແນມ 02 ລໍາ ບິນຜ່ານຊ່ອງແຄບໄຕຫວັນ ເພື່ອປົກປ້ອງອະທິປະໄຕຂອງ ຈີນ. ນອກຈາກນັ້ນ, ວັນທີ 20 ພະຈິກ 2021, ກະຊວງການຕ່າງປະເທດ ອາເມລິກາ ໄດ້ຖະແຫຼງການຈະຈັດການເຈລະຈາທາງດ້ານເສດຖະກິດ, ພະລັງງານ ແລະ ສິ່ງແວດລ້ອມ ຮອບທີ 02 ລະຫວ່າງ ອາເມລິກາ ແລະ ໄຕຫວັນ ໂດຍກ່າວວ່າ ເພື່ອປົກປ້ອງເສລີພາບ ແລະ ລະບອບປະຊາທິປະໄຕຮ່ວມກັນ, ຫຼັງຈາກການເຈລະຈາຮອບທໍາອິດໃນປີ 2020 ຜ່ານມາ.

ຂໍ້ຕົກລົງຄູ່ຮ່ວມມືເສດຖະກິດຮອບດ້ານໃນພາກພື້ນ (RCEP) ຈະມີຜົນບັງຄັບໃຊ້ ໃນວັນທີ 1 ມັງກອນ 2022 ພາຍຫຼັງ 10 ປະເທດສະມາຊິກ ຈາກທັງໝົດ 15 ປະເທດ ໄດ້ສໍາເລັດການຮ່ວມໃຫ້ສັດຕະຍາບັນ ຄື: ບຣູໄນ, ກໍາປູເຈຍ, ລາວ, ສິງກະໂປ,ໄທ, ຫວຽດນາມ, ສປ ຈີນ, ຍີ່ປຸ່ນ, ນູແວນເຊລັງ ແລະ ອົດສະຕຣາລີ. ສ່ວນອີກ 5 ປະເທດ ຍັງບໍ່ໄດ້ໃຫ້ສັດຕະຍາບັນ ມີ: ອິນໂດເນເຊຍ, ມຽນມາ, ຟີລິບປິນ, ມາເລເຊຍ ແລະ ສ. ເກົາຫຼີ. RCEP ເປັນຂໍ້ຕົກລົງການຄ້າເສລີທີ່ໃຫຍ່ທີ່ສຸດໃນໂລກ ກວມເອົາ 30% ຂອງປະຊາກອນໂລກ ແລະ ມູນຄ່າທາງເສດຖະກິດ ແລະ ການຄ້າ ລວມ 30% ຂອງ GDP ໂລກ.

**3) ສະພາບການ ໃນຂົງເຂດເອີລົບ-ອາເມລິກາ**

ບັນຫາຜູ້ອົບພະຍົບໃນເຂດຊາຍແດນຂອງໂປໂລຍ ແລະ ເບລາຣຸດຊີ ທີ່ມີຄວາມຮຸນແຮງ ສືບເນື່ອງມາແຕ່ເດືອນຜ່ານມາ ພວມໄດ້ຮັບຄວາມສົນໃຈຈາກປະຊາຄົມໂລກ, ຊາວຜູ້ອົບພະຍົບຈາກອີຣັກ, ຊີຣີ, ເຢເມນ ມີຄວາມຫວັງ ຈະເດີນທາງເຂົ້າໄປໂປແລນ ເຊິ່ງເປັນປະເທດໜຶ່ງ ໃນສະຫະພາບເອີລົບ ທ່າມກາງອາກາດໜາວຈັດ, ເຊິ່ງບັນດາປະເທດເອີລົບ ໄດ້ກ່າວຫາວ່າ ເບລາຣຸດຊີ ເປັນຜູ້ສ້າງບັນຫາດັ່ງກ່າວ ໂດຍການຂົນສົ່ງຜູ້ອົບພະຍົບເຫຼົ່ານັ້ນ ໄປເຂດຊາຍແດນລະຫວ່າງ ເບລຣຸດຊີ ແລະ ໂປແລນ ເພື່ອທໍາລາຍຄວາມໝັ້ນຄົງຂອງ ອີຢູ ເພື່ອຕອບໂຕ້ຄືນອີຢູ ທີ່ໃຊ້ມາດຕະການຂວໍ້າບາດເບລາຣຸດຊີ ໂດຍອ້າງວ່າ ເບລາຣຸດຊີ ປາບປາມຊາວອົບພະຍົບຢ່າງຮຸນແຮງ ໃນເດືອນສິງຫາ 2021 ຜ່ານມາ. ຮອງປະທານຄະນະກໍາມະການອີຢູ ໄດ້ໃຫ້ສໍາພາດວ່າ ຜູ້ອົບພະຍົບດັ່ງກ່າວ ບໍ່ແມ່ນຜູ້ອົບພະຍົບແບບປົກກະຕິ ທີ່ໜີສົງຄາມ ເພື່ອຫວັງເພິ່ງພາອີຢູ, ແຕ່ເປັນຜູ້ອົບພະຍົບ ທີ່ເດີນທາງດ້ວຍເຄື່ອງບິນ ໄປລົງທີ່ນະຄອນຫຼວງມິ້ນ ຂອງເບລາຣຸດຊີ ໂດຍໄດ້ຮັບການອໍານວຍຄວາມສະດວກຈາກເຈົ້າໜ້າທີ່ຂອງເບລາຣຸດຊີ ມາຍັງຊາຍແດນດັ່ງກ່າວ. ຂະນະດຽວກັນ, ອີຢູ ໄດ້ມີມາດຕະການຂວໍ້າບາດຄັ້ງໃໝ່ ຕໍ່ເບລາຣຸດຊີ ໃນບັນຫາຄັ້ງນີ້ ເຊິ່ງໄດ້ເລີ່ມປະຕິບັດຕັ້ງແຕ່ວັນທີ 15 ພະຈິກ 2021 ເປັນຕົ້ນໄປ. ປະທານາທິບໍດີ ອາເລັກຊານເດີ ລູກາເຊັນໂກ ຂອງເບລາຣຸດຊີ ໄດ້ປະຕິເສດ ບໍ່ມີຄວາມກ່ຽວພັນໃດໆ ຕໍ່ຊາວຜູ້ອົບພະຍົບດັ່ງກ່າວ ແລະ ໄດ້ປະກາດວ່າ ເມື່ອອີຢູ ໃຊ້ມາດຕະການຂວໍ້າບາດໃໝ່ ຕໍ່ ເບລາຣຸດຊີ ກໍຈະຕອບໂຕ້ ດ້ວຍການຈໍາກັດການສົ່ງກາສຈາກລັດເຊຍ ທີ່ຜ່ານເບລາຣຸດຊີ ໄປຍັງເອີລົບ, ພ້ອມທັງກ່າວວ່າ ຕ້ອງການໃຫ້ເຄື່ອງບິນຖິ້ມລະເບີດ ທີ່ສາມາດຕິດຫົວລົບນິວເຄລຍ ຂອງລັດເຊຍ ຊ່ວຍແກ້ໄຂ ບັນຫາຜູ້ອົບພະຍົບໃນຊາຍແດນລະຫວ່າງເບລາຣຸດຊີ ກັບໂປໂລຍ. ບັນດາປະເທດ ທີ່ມີຊາຍແດນຕິດກັບເບລາຣຸດຊີ ເຊັ່ນ: ລິດຕົວນີ, ແອັດສະໂຕນີ, ລັດເວຍ ໄດ້ສະແດງຄວາມກັງວົນວ່າ ຜູ້ນໍາເບລາຣຸດຊີ ເປັນໄພຄຸກຄາມ ຕໍ່ສະຫະພາບເອີລົບ ແລະ ໄດ້ຖະແຫຼງຮ່ວມກັນວ່າ ສະຖານະການຜູ້ອົບພະຍົບ ເປັນການຍຸແຍ່ ທີ່ອາດຈະນໍາໄປສູ່ການປະທະທາງການທະຫານ. ອູແກຣນ ບໍ່ໄດ້ເປັນສະມາຊິກສະຫະພາບເອີລົບ ກໍໄດ້ສະແດງຄວາມກັງວົນຕໍ່ສະຖານະການທີ່ເກີດຂຶ້ນ ແລະ ໄດ້ປະກາດສົ່ງທະຫານ ແລະ ຕໍາຫຼວດ 8500 ກວ່າຄົນ ໄປທາງທິດເໜືອຂອງປະເທດ ທີ່ຕິດກັບເບລາຣຸດຊີ, ວັນທີ 25 ຕຸລາ ຜ່ານມາ

ໂປໂລຍ ກໍໄດ້ສົ່ງກຳລັງທະຫານເຂົ້າໄປຍັງ ຊາຍແດນທີ່ຕິດກັບ ເບລາຣຸດຊີ ເພີ່ມອີກ 2.500 ຄົນ ໃຫ້ເປັນ 10.000 ຄົນ ເພື່ອຕ້ານການອົບພະຍົບຂ້າມຊາຍແດນທີ່ຜິດກົດໝາຍມາຈາກ ເບລາຣຸດຊີ. ປະທານສະພາສະຫະພາບເອີລົບ ໄດ້ຖະແຫຼງວ່າ ສະຫະພາບເອີລົບ ຄວນສະໜັບສະໜູນການເງິນ, ປັບປຸງໂຄງລ່າງພື້ນຖານແຄບຊາຍແດນ ເພື່ອຊ່ວຍປົກປ້ອງຊາຍແດນ ຂອງໂປໂລຍ ແລະ ລິດທົວນີ. ສ່ວນ ນາຍົກລັດຖະມົນຕີເຢຍລະມັນ ໄດ້ລົມສາຍກັບປະທານາທິບໍດີລັດເຊຍ ເພື່ອຊ່ວຍໃຫ້ແກ້ໄຂບັນຫາຜູ້ອົບພະຍົບ ເພາະວ່າ ທ່າທີຂອງ ທ່ານ ປູຕິນ ຈະສົ່ງຜົນຕໍ່ທ່າທີຂອງຜູ້ນຳ ເບລາຣຸດຊີ ເຖິງແມ່ນວ່າ ໃນວັນທີ 9 ພະຈິກ 2021 ຜ່ານມາ, ທ່ານ ປູຕິນ ໄດ້ລົມສາຍກັບ ທ່ານ ອາເລັກຊານເດີ ລູກາເຊັນໂກ, ປະທານາທິບໍດີເບລາຣຸດຊີ ຕໍ່ບັນຫາດັ່ງກ່າວແລ້ວກໍຕາມ.

**4) ສະພາບການໃນຂົງເຂດຕາເວັນອອກກາງ**

ເຈົ້າໜ້າທີ່ຕາລີບັນ ກ່າວວ່າ ໄດ້ເລີ່ມຈ່າຍເງິນໃຫ້ແກ່ພະນັກງານທີ່ເຮັດວຽກໃຫ້ກັບລັດຖະບານແລ້ວ ພາຍຫຼັງພວກເຂົາ ບໍ່ໄດ້ຮັບເງິນເດືອນ ນັບແຕ່ກຸ່ມຕາລະບັນ ໄດ້ເຂົ້າຍຶດຄອງນະຄອນຫລວງ ກາບູນ ໃນວັນທີ 15 ສິງຫາ 2021 ເປັນຕົ້ນມາ.

ວັນທີ 20/11/2021, ກຸ່ມຮູຕິ ໃນເຢເມນ ກ່າວວ່າ ພວກຕົນໄດ້ໃຊ້ເຮືອບິນໂດຣນ ຈຳນວນ 14 ລຳ ໂຈມຕີບາງເມືອງໃນອາຣັບບີ ຊາອຸດິດ ເຊັ່ນ: ເຂດພື້ນຖານໂຄງລ່າງ Saudi Aramco ໃນເມືອງ Jeddah ເພື່ອຕອບໂຕ້ ທີ່ອາຣັບບີ ຊາອຸດິດ ແລະ ພັນທະມິດ ໄດ້ໂຈມຕີກຸ່ມຮູຕິກ່ອນ ໃນ 13 ແຫ່ງ ຂອງເຢເມນ ຫວັງລ່ວງລ້ຳ ແລະ ຍຶດຄອງເຢເມນ. ຄວາມວຸ່ນວາຍໃນເຢເມນ ເລີ່ມຂຶ້ນແຕ່ປີ 2014 ເຊິ່ງເຮັດໃຫ້ກຸ່ມຮູຕິ ສາມາດຍຶດຄອງບາງແຂວງຂອງເຢເມນ, ເຊິ່ງ ສປຊ ໄດ້ລາຍງານວ່າ ສົງຄາມກາງເມືອງທີ່ເກີດຂຶ້ນ ເຮັດໃຫ້ມີຜູ້ເສຍຊີວິດ 233,000 ຄົນ.

5). **ກອງປະຊຸມກຸ່ມປະເທດ G20**

ວັນທີ 30–31/10/2021, ກອງປະຊຸມສຸດຍອດຂອງກຸ່ມປະເທດ G20 ຄັ້ງທີ 16 ທີ່ນະຄອນ ຫຼວງໂຣມ, ປະເທດ ອີຕາລີ ໄດ້ແລກປ່ຽນຄວາມຄິດເຫັນຮ່ວມກັນກ່ຽວກັບການປ່ຽນແປງຂອງດິນຟ້າອາກາດ, ສິ່ງແວດລ້ອມ, ການພັດທະນາແບບຍືນຍົງ, ບັນຫາຊາວອົບພະຍົບ, ການຕ້ານການແຜ່ລະບາດຂອງພະຍາດໂຄວິດ-19 ໂດຍສະເພາະແມ່ນການແບ່ງປັນວັກແຊງໂຄວິດ-19 ຢ່າງຍຸຕິທຳ ແລະ ອື່ນໆ. ກອງປະຊຸມໄດ້ຕັ້ງເປົ້າໝາຍວ່າ ຈະໃຫ້ປະຊາກອນທຸກປະເທດໃນໂລກໄດ້ຮັບວັກແຊງກວມ 40% ເມື່ອຮອດທ້າຍປີ 2021 ແລະ 70% ເມື່ອຮອດກາງປີ 2022, ສືບຕໍ່ປະຕິບັດຕາມສົນທິສັນຍາປາຣີ 2015.

ກອງປະຊຸມຄັ້ງນີ້, ມີຜູ້ນຳ ຫຼາຍປະເທດ ແລະ ອົງການສາກົນ ໄດ້ມີຄຳເຫັນກ່ຽວກັບບັນຫາປ້ອງກັນ-ຕ້ານ ແລະ ສະກັດກັ້ນການແຜ່ລະບາດ ຂອງ ພະຍາດ COVID-19, ສັງລວມດັ່ງນີ້:

- ທ່ານ ມາຣີໂອ ດຣະກີ, ນາຍົກລັດຖະມົນຕີອີຕາລີ ທີ່ເປັນປະທານໝູນວຽນຂອງກຸ່ມ G20 ໄດ້ຮຽກຮ້ອງໃຫ້ບັນດາປະເທດເພີ່ມທະວີການຮ່ວມມືກັນ, ສະໜອງວັກແຊງໂຄວິດ-19 ໃຫ້ແກ່ປະເທດທີ່ດ້ອຍພັດທະນາທີ່ສຸດ, ທັງຊຸກຍູ້ການແບ່ງປັນວັກແຊງໂຄວິດ-19 ຢ່າງຍຸຕິທຳ.
- ທ່ານ ວະລາດີເມຍ ປູຕິນ, ປະທານາທິບໍດີລັດເຊຍ ໄດ້ຮຽກຮ້ອງໃຫ້ກຸ່ມ G20 ແກ້ໄຂບັນຫາການຮັບຮອງວັກແຊງໂຄວິດ-19 ຊຶ່ງກັນ ແລະ ກັນ ແລະ ໃບຢັ້ງຢືນການສັກວັກແຊງໂຄວິດ-19 ໂດຍໄວ.
- ອົງການອະນາໄມໂລກ ຫຼື WHO ມີຄຳເຫັນວ່າ: ຢູ່ປະເທດທີ່ມີອັດຕາການສັກວັກແຊງໂຄວິດ-19 ຕ່ຳ ຈະມີຄວາມສ່ຽງການເກີດມີເຊື້ອໄວຣັດໂຄວິດ-19 ກາຍພັນເປັນຊະນິດໃໝ່ ແລະ ເປັນໄພຂົ່ມຂູ່ຕໍ່ຫຼາຍປະເທດ.
- ທ່ານ ສີ ຈິ້ນຜິງ, ປະທານປະເທດ ສປ ຈີນ ໄດ້ສະເໜີຂໍ້ລິເລີ່ມການປະຕິບັດງານໃນການຮ່ວມມືດ້ານວັກແຊງທົ່ວໂລກດັ່ງນີ້: 1). ເພີ່ມທະວີການຮ່ວມມືໃນການຄົ້ນຄວ້າວິທະຍາສາດດ້ານວັກຊີນ, ສະໜັບສະໜູນວິສາຫະກິດວັກແຊງ ຮ່ວມກັບປະເທດກຳລັງພັດທະນາດຳເນີນການຄົ້ນຄວ້າ ແລະ ການຜະລິດ; 2). ຍຶດໝັ້ນຄວາມຍຸຕິທຳ ແລະ ເປັນທຳ, ເພີ່ມທະວີການຊ່ວຍເຫຼືອວັກແຊງໃຫ້ປະເທດທີ່ກຳລັງພັດທະນາ, ຈັດຕັ້ງປະຕິບັດເປົ້າໝາຍການສັກວັກແຊງໃນໂລກປີ 2022 ທີ່ສະເໜີໂດຍອົງການອະນາໄມໂລກ; 3). ສະໜັບສະໜູນໃຫ້ອົງການການຄ້າໂລກດຳເນີນການຕົກລົງກ່ຽວກັບການຍົກເວັ້ນຊັບສິນທາງປັນຍາ ຂອງວັກແຊງໂດຍໄວ, ສົ່ງເສີມໃຫ້ວິສາຫະກິດວັກແຊງໂອນມອບເຕັກນິກໃຫ້ແກ່ປະເທດທີ່ກຳລັງພັດທະນາ; 4). ເພີ່ມທະວີການຮ່ວມມືດ້ານການຄ້າຂ້າມຊາດ, ຮັບປະກັນໃຫ້ການຄ້າດ້ານວັກແຊງ ແລະ ວັດຖຸດິບມີຄວາມໂລ່ງລ່ຽນ; 5). ປະຕິບັດຕໍ່ວັກແຊງຕ່າງໆດ້ວຍຄວາມຍຸດຕິທຳ, ຊຸກຍູ້ການຮັບຮອງວັກແຊງເຊິ່ງກັນ ແລະ ກັນ; 6). ສະໜັບສະໜູນດ້ານການເງິນແກ່ການຮ່ວມມືດ້ານວັກແຊງໃນໂລກ.

### 3. ການເຄື່ອນໄຫວຂອງບັນດາພັກການເມືອງຕ່າງປະເທດ

#### 1) ພັກກອມມູນິດຫວຽດນາມ

ວັນທີ 18/11/2021, ຄະນະປະຈຳ-ຄະນະຊີ້ນຳຂັ້ນສູນກາງກ່ຽວກັບການປ້ອງກັນ, ຕ້ານການສໍ້ລາດບັງຫຼວງ ແລະ ປະກົດການຫຍໍ້ທໍ້ ໄດ້ດຳເນີນກອງປະຊຸມ ໂດຍການເປັນປະທານຂອງ ສະຫາຍ ຫງວຽນຟູຈ້ອງ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ, ຫົວໜ້າຄະນະຊີ້ນຳ. ກອງປະຊຸມຄັ້ງນີ້ໄດ້ປຶກສາຫາລື, ປະກອບຄຳຄິດເຫັນຊີ້ນຳໃນການແກ້ໄຂ ບາງຄະດີ, ກໍລະນີ ແລະ ວຽກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຄະນະຊີ້ນຳ; ການປັບປຸງເພີ່ມເຕີມກົນໄກການເຮັດວຽກ ແລະ ຂໍ້ກຳນົດວ່າດ້ວຍການແບ່ງຄວາມຮັບຜິດຊອບໃຫ້ແກ່ສະມາຊິກຂອງຄະນະຊີ້ນຳ. ຄະນະປະຈຳຄະນະຊີ້ນຳ ໄດ້ຕີລາຄາວ່າ ພາຍຫຼັງກອງປະຊຸມຄັ້ງທີ 19 ຂອງຄະນະຊີ້ນຳ (1/2021) ບັນດາຄະນະພັກ, ການຈັດຕັ້ງພັກຂັ້ນຕ່າງໆ, ບັນດາອົງການວິຊາສະເພາະກ່ຽວຂ້ອງ ໄດ້ຕັ້ງໜ້າພະຍາຍາມໃນການຈັດຕັ້ງປະຕິບັດ ບົດສະຫຼຸບຂອງຄະນະຊີ້ນຳ ເປັນຕົ້ນໄດ້ເຊື່ອມຊຶມ ແລະ ຜັນຂະຫຍາຍໜ້າທີ່ປ້ອງກັນ, ຕ້ານປະກົດການຫຍໍ້ທໍ້ ຕິດພັນກັບການປ້ອງກັນ, ຕ້ານການສໍ້ລາດບັງຫຼວງ ເຊິ່ງໃຈກາງແມ່ນການເສື່ອມຖອຍດ້ານແນວຄິດການເມືອງ, ຄຸນສົມບັດ, ແບບແຜນການດຳລົງຊີວິດ ຈຶ່ງໄດ້ເຮັດໃຫ້ວຽກງານປ້ອງກັນ, ຕ້ານການສໍ້ລາດບັງຫຼວງ ແລະ ປະກົດການຫຍໍ້ທໍ້ເວົ້າລວມ, ເວົ້າສະເພາະແມ່ນການຊອກໃຫ້ເຫັນ, ແກ້ໄຂບັນດາຄະດີ, ກໍລະນີ ການສໍ້ລາດບັງຫຼວງ, ປະກົດການຫຍໍ້ທໍ້ ສືບຕໍ່ໄດ້ຮັບການຍູ້ແຮງ ແລະ ມີບາດກ້າວຢ່າງຕັ້ງໜ້າ, ພົ້ນເດັ່ນແມ່ນ ຄະນະກວດກາສູນກາງພັກໄດ້ສຸມໃສ່ກວດກາ, ແກ້ໄຂ, ປະຕິບັດວິໄນ ແລະ ສະເໜີໃຫ້ປະຕິບັດວິໄນຕໍ່ 12 ການຈັດຕັ້ງພັກ, ສະມາຊິກພັກ 20 ຄົນ ທີ່ນອນຢູ່ໃນຄວາມຮັບຜິດຊອບຂອງ ກົມການເມືອງ, ຄະນະເລຂາທິການສູນກາງພັກ ຄຸ້ມຄອງ ທີ່ກ່ຽວຂ້ອງກັບຄະດີ, ກໍລະນີ ທີ່ຄະນະຊີ້ນຳ ຕິດຕາມ ແລະ ຊີ້ນຳ (ໃນນັ້ນມີ ກຳມະການສູນກາງພັກ, ອະດີດກຳມະການສູນກາງພັກ 03 ສະຫາຍ; ຮອງລັດຖະມົນຕີ 02 ສະຫາຍ; ເຈົ້າແຂວງ 01 ສະຫາຍ; ອະດີດຮອງເລຂາພັກແຂວງ 01 ສະຫາຍ; ຜູ້ບັງຄັບບັນຊາລະດັບສູງໃນກຳລັງປະກອບອາວຸດ 13 ສະຫາຍ).

#### 2) ພັກກອມມູນິດຈີນ

ວັນທີ 08/11/2021, ກອງປະຊຸມຄົບຄະນະ ຄັ້ງທີ 6 ຂອງຄະນະກຳມະການສູນກາງພັກກອມມູນິດຈີນ ສະໄໝທີ 19 ໄດ້ໄຂຂຶ້ນຢ່າງເປັນທາງການທີ່ ນະຄອນຫລວງປັກກິ່ງ. ກອງປະຊຸມໄດ້ຄົ້ນຄວ້າພິຈາລະນາ ຮ່າງມະຕິຂອງສູນກາງພັກກອມມູນິດຈີນ ກ່ຽວກັບຜົນສຳເລັດອັນໃຫຍ່ຫລວງ ແລະ ສຳຄັນ ລວມທັງບົດຮຽນປະຫວັດສາດແຫ່ງຜົນສຳເລັດຂອງພັກ ໃນການສູ້ຊົນໃນຮອບຮ້ອຍປີຜ່ານມາ, ເຊິ່ງເປັນຮ່າງມະຕິປະຫວັດສາດສະບັບທີສາມ ທີ່ພັກກອມມູນິດຈີນ ສ້າງຂຶ້ນຫລັງປີ 1945 ແລະ ປີ 1981 ແລະ ຈະວາງທິດທາງແຜນການ ໃນຫລາຍສິບປີຕໍ່ໜ້າ, ນຳພາພັກກອມມູນິດຈີນ ກ້າວສູ່ເປົ້າໝາຍສູ້ຊົນຮ້ອຍປີປະການທີ 2.

ວັນທີ 19/11/2021, ສະຫາຍ ສີຈິ້ນຜິງ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຈີນ, ປະທານປະເທດຈີນ ແລະ ປະທານຄະນະກຳມະການການທະຫານສູນກາງຈີນ ໄດ້ເຂົ້າຮ່ວມກອງປະຊຸມກໍ່ສ້າງ "ໜຶ່ງແລວ ໜຶ່ງເສັ້ນທາງ" ຄັ້ງທີ 3 ຢູ່ນະຄອນຫຼວງປັກກິ່ງ ແລະ ກ່າວຄຳປາໄສທີ່ສຳຄັນ ໂດຍເນັ້ນໜັກວ່າ: ແນວຄິດການພັດທະນາໃໝ່ ຄວນໄດ້ຮັບການປະຕິບັດຢ່າງຄົບຖ້ວນ, ຖືກຕ້ອງ, ດ້ວຍບັນດາຈຸດໝາຍທີ່ມີມາດຕະຖານສູງ, ຄວາມຍືນຍົງ, ຊີວິດການເປັນຢູ່ຂອງປະຊາຊົນ, ຮັດແໜ້ນພື້ນຖານການເຊື່ອມໂຍງ ແລະ ການຮ່ວມມື, ເປີດກວ້າງຊ່ອງທາງໃໝ່ໃຫ້ແກ່ການຮ່ວມມືສາກົນ. ສ້າງເຄືອຂ່າຍການປ້ອງກັນ ແລະ ຄວບຄຸມຄວາມສ່ຽງ, ພະຍາຍາມບັນລຸລະດັບການຮ່ວມມືທີ່ສູງຂຶ້ນ, ປະສິດທິພາບການລົງທຶນທີ່ສູງຂຶ້ນ ແລະ ຄຸນນະພາບການສະໜອງທີ່ສູງຂຶ້ນໃຫ້ບັນລຸໄດ້ໝາກຜົນໃໝ່ຢ່າງບໍ່ຢຸດຢັ້ງ.

ວັນທີ 22/11/2021, ສະຫາຍ ສີຈິ້ນຜິງ ໄດ້ເປັນປະທານກອງປະຊຸມສຸດຍອດການພົວພັນຄູ່ເຈລະຈາຈີນ-ອາຊຽນ ຄົບຮອບ 30 ປີ ຢູ່ນະຄອນຫຼວງປັກກິ່ງ ຜ່ານວິດີໂອທາງໄກ ແລະ ກ່າວຄຳປາໄສ ໃນຫົວຂໍ້ "ຈຸດໝາຍປາຍທາງ ແລະ ການສ້າງບ້ານຮ່ວມກັນ". ຈີນ ແລະ ອາຊຽນ ໄດ້ປະກາດສ້າງການພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານລະຫວ່າງ ຈີນ ກັບ ອາຊຽນ ຢ່າງເປັນທາງການ. ສະຫາຍ ສີຈິ້ນຜິງ ໄດ້ສະເໜີ 5 ຂໍ້ກ່ຽວກັບການພົວພັນຈີນ-ອາຊຽນໃນອະນາຄົດຄື: 1) ສ້າງເຮືອນທີ່ສະຫງົບສຸກຮ່ວມກັນ; 2) ກໍ່ສ້າງບ້ານສະຫງົບຮ່ວມກັນ; 3) ສ້າງບ້ານຈະເລີນຮຸ່ງເຮືອງຮ່ວມກັນ; 4) ສ້າງເຮືອນທີ່ສວຍງາມຮ່ວມກັນ ແລະ 5) ສ້າງບ້ານເປັນມິດຮ່ວມກັນ. ສະຫາຍ ສີຈິ້ນຜິງ ກ່າວຕື່ມວ່າ: ໝາກຜົນຂອງການຮ່ວມມືລະຫວ່າງຈີນ-ອາຊຽນ ໃນ 30 ປີຜ່ານມາ ແມ່ນຜົນປະໂຫຍດຈາກຄວາມໃກ້ຊິດທາງພູມສາດ ແລະ ມະນຸດສະທຳຂອງສອງຝ່າຍ ແລະ ຍັງບໍ່ສາມາດແຍກອອກຈາກພວກເຮົາຢ່າງຕັ້ງໜ້າຕາມ

ທ່າອ່ຽງການພັດທະນາຂອງຍຸກສະໄໝ ແລະ ສ້າງປະຫວັດສາດທີ່ຖືກຕ້ອງ. ພວກເຮົາຄວນ: 1) ເຄົາລົບນັບຖືເຊິ່ງກັນແລະກັນ ແລະ ຍຶດໝັ້ນບັນດາມາດຖານພື້ນຖານຂອງການພົວພັນສາກົນ; 2) ຮ່ວມມືເອົາຊະນະ ແລະ ເດີນຕາມເສັ້ນທາງພັດທະນາໂດຍສັນຕິພາບ; 3) ເຝົ້າລະວັງ, ຊ່ວຍເຫຼືອເຊິ່ງກັນແລະກັນ ແລະ ປະຕິບັດແນວຄວາມຄິດ ກ່ຽວກັບຄວາມສາມັກຄີ, ຄວາມຈິງໃຈ ແລະ ຄວາມອົດທົນ; 4) ອົດທົນ, ຮໍ່າຮຽນເຊິ່ງກັນແລະກັນ ແລະ ຮ່ວມກັນສ້າງລັດທິພາກພື້ນທີ່ເປີດກວ້າງ; ຜູ້ນໍາປະເທດອາຊຽນ ໄດ້ຂອບໃຈຈີນ ທີ່ໄດ້ຈັດກອງປະຊຸມສຸດຍອດການພົວພັນຄູ່ເຈລະຈາອາຊຽນ-ຈີນ ຄົບຮອບ 30 ປີ, ຊົມເຊີຍວັນສ້າງຕັ້ງພັກກອມມູນິດຈີນ ຄົບຮອບ 100 ປີ ແລະ ຜົນສໍາເລັດອັນເປັນພິເສດໃນການສ້າງສາສັງຄົມທີ່ດີໃນທຸກດ້ານ; ຍິນດີຮ່ວມກັບຈີນ ເລັ່ງການເຊື່ອມໂຍງຂໍ້ລິເລີ່ມ "ໜຶ່ງແລວ ໜຶ່ງເສັ້ນທາງ" ແລະ "ແຜນແມ່ບົດການເຊື່ອມໂຍງອາຊຽນ 2025" ເພື່ອເປີດເຜີຍທ່າແຮງການຮ່ວມມື, ລົງເລິກການຮ່ວມມືຕົວຈິງໃນຂົງເຂດຕ່າງໆ. ເພີ່ມທະວີການແລກປ່ຽນວັດທະນະທໍາ. ບັນດາປະເທດອາຊຽນ ຍິນດີຮ່ວມກັບຈີນ ປົກປັກຮັກສາລັດທິຫຼາຍຝ່າຍ, ລະບົບການຄ້າຫຼາຍຝ່າຍ ແລະ ຫຼັກການທີ່ເປັນການຮັບຮູ້ຂອງກົດໝາຍສາກົນ, ຮ່ວມມືຊຸກຍູ້ການເຊື່ອມໂຍງເສດຖະກິດຂອງພາກພື້ນ, ຮ່ວມກັນຮັບມືກັບສິ່ງທ້າທາຍຂອງໂລກເຊັ່ນ: ການປ່ຽນແປງຂອງດິນຟ້າອາກາດ ເພື່ອບັນລຸຄວາມສີຂຽວ ແລະ ຍືນຍົງ. ກອງປະຊຸມໄດ້ຮັບຮອງເອົາ "ຖະແຫຼງການຮ່ວມຂອງກອງປະຊຸມສະເຫຼີມສະຫຼອງ 30 ປີແຫ່ງວັນສ້າງຕັ້ງການພົວພັນຄູ່ເຈລະຈາລະຫວ່າງຈີນກັບອາຊຽນ".

**3). ພັກແຮງງານເກົາຫຼີ**

ວັນທີ 18/11/2021, ສປປ ເກົາຫຼີ ໄດ້ເປີດກອງປະຊຸມປະຕິວັດ 3 ປະການ ຄັ້ງທີ 5 ທົ່ວປະເທດ ຢູ່ນະຄອນຫຼວງພຽງຢາງ ໂດຍການເປັນປະທານຂອງ ສະຫາຍ ແຈຮອງແຮ, ກໍາມະການກົມການເມືອງສູນກາງພັກ, ຮອງປະທານກິດຈະການແຫ່ງລັດຜູ້ທີໜຶ່ງ, ປະທານຄະນະກໍາມະການປະຈໍາສະພາປະຊາຊົນສູງສຸດ ແລະ ມີບັນດາການນໍາສູນກາງພັກ, ການນໍາແຕ່ລະກະຊວງ, ອົງການທຽບເທົ່າຂັ້ນສູນກາງ, ຂັ້ນແຂວງ ແລະ ເມືອງ ໃນທົ່ວປະເທດເຂົ້າຮ່ວມ. ການປະຕິວັດ 3 ປະການ ຂອງແນວຄິດຈຸເຊແມ່ນ: 1. ອຸດົມການ, 2. ວິທະຍາສາດ ແລະ ເຕັກໂນໂລຊີ, 3. ວັດທະນະທໍາ. ກອງປະຊຸມຄັ້ງນີ້ ໄດ້ມີການປັບປຸງດ້ານອຸດົມການ, ວິທະຍາສາດ ແລະ ວັດທະນະທໍາ ໃຫ້ໄປຕາມຍຸກສະໄໝ ແລະ ຕາມຄວາມຮຽກຮ້ອງຕ້ອງການຂອງສັງຄົມ ເພື່ອບັນລຸການພັດທະນາທຸກດ້ານຂອງການກໍ່ສ້າງສັງຄົມນິຍົມຕາມສີສັນແບບ ສປປ ເກົາຫຼີ. ໃນໂອກາດດັ່ງກ່າວ ສະຫາຍ ກິມເຈິງອຸນ, ຜູ້ນໍາສູງສຸດ ສປປ ເກົາຫຼີ ໄດ້ສົ່ງຈົດໝາຍອວຍພອນກອງປະຊຸມທີ່ໄດ້ສະແດງໃຫ້ເຫັນເຖິງນໍ້າໃຈອັນສູງສົ່ງ ຂອງ ຄະນະບໍລິຫານງານສູນກາງພັກແຮງງານເກົາຫຼີ ເພື່ອແນໃສ່ຊຸກຍູ້ການພັດທະນາປະເທດຊາດ ຢ່າງບໍ່ຢຸດຢັ້ງ ແລະ ສ້າງຄວາມດຸ່ນດ່ຽງຂອງທຸກຂົງເຂດ ແລະ ສັງຄົມໃນທົ່ວປະເທດ ດ້ວຍການເຄື່ອນໄຫວປະຕິວັດ 3 ປະການ ເພື່ອເປັນກໍາລັງແຮງຂັບເຄື່ອນການພັດທະນາ ແລະ ຄວາມເຊື່ອໝັ້ນຕໍ່ການນໍາພາຂອງພັກ.

**4). ພັກກອມມູນິດກູບາ**

ລັດຖະບານກູບາ ໄດ້ກຽມພ້ອມຮັບມື ແລະ ປະນາມຄວາມພະຍາຍາມບັ່ນທອນຄວາມໝັ້ນຄົງພາຍໃນຂອງກຸ່ມຕໍ່ຕ້ານທີ່ອ້າງໂຕວ່າ ຕ້ອງການເດີນຂະບວນແບບສັນຕິ ໃນວັນທີ 15 ພະຈິກ 2021, ໂດຍມີຈຸດປະສົງ ເພື່ອປຸກລະດົມປະຊາຊົນ ແລະ ຊຸກຍູ້ໃຫ້ເກີດການປະທ້ວງຄືດັ່ງຄັ້ງວັນທີ 11 ກໍລະກົດ 2021 ຜ່ານມາ ເພື່ອນໍາໄປສູ່ການກໍ່ລັດຖະປະຫານທາງອ້ອມ ຫວັງໂຄ່ນລົ້ມລັດຖະບານ ໂດຍໄດ້ຮັບການສະໜັບສະໜູນຈາກພາຍນອກ. ດັ່ງນັ້ນ, ເພື່ອຕອບໂຕ້ ແລະ ຕີຖອຍຕໍ່ຄວາມພະຍາຍາມດັ່ງກ່າວ ອົງການຈັດຕັ້ງມະຫາຊົນ ໄດ້ເຄື່ອນໄຫວເຕົ້າໂຮມຄວາມສາມັກຄີ ແລະ ຊຸກຍູ້ນັກຮຽນຮູ້ປັນຍາຊົນ, ນັກສຶກສາ ແລະ ທຸກຊັ້ນຄົນ ເພື່ອນໍາພາປະຊາຊົນຕໍ່ຕ້ານການກະທໍາດັ່ງກ່າວ ສະແດງໃຫ້ປະຊາຄົມໂລກຮັບຮູ້ສະພາບຄວາມເປັນຈິງຂອງກູບາ ທີ່ສື່ຂ່າວຕາເວັນຕົກໄດ້ບິດເບືອນ. ປັດຈຸບັນ ສ.ກູບາ ກໍາລັງຕົກຢູ່ໃນສະພາບຄວາມຫຍຸ້ງຍາກ, ເພາະກໍາລັງເປີດປະເທດ ເພື່ອຟື້ນຟູເສດຖະກິດໃນທ່າມກາງການປິດລ້ອມຂອງອາເມຣິກາ, ເຮັດໃຫ້ລັດຖະບານຂາດລາຍຮັບໃນ 02 ປີຜ່ານມາ ເຮັດໃຫ້ເສດຖະກິດຝືດເຄືອງ, ຂາດແຄນສິນຄ້າອຸປະໂພກບໍລິໂພກ, ເກີດໄພເງິນເຟີ້, ສິນຄ້າລາຄາແພງຂຶ້ນ, ເຮັດໃຫ້ປະຊາຊົນຈໍານວນໜຶ່ງເກີດແນວຄິດທໍ້ຖອຍ ແລະ ຫຼົງເຊື່ອກົນອຸບາຍຂອງສັດຕູ ຈຶ່ງເກີດມີການໂຮມຊຸມນຸມຕໍ່ຕ້ານລັດຖະບານ, ແຕ່ດ້ວຍນໍ້າໃຈຮັກຊາດ ບວກກັບກ້ອນກໍາລັງຄວາມສາມັກຄີຂອງມະຫາຊົນທີ່ມີລັກສະນະແບບເປັນເອກະລັກຂອງກູບາ ບວກກັບການປ້ອງກັນຊາດປ້ອງກັນຄວາມສະຫງົບທີ່ເຂັ້ມແຂງ ສາມາດຮັກສາສະຖຽນລະພາບທາງການເມືອງຂອງກູບາ ໄວ້ໄດ້ຢ່າງໝັ້ນຄົງ.

**5). ການເລືອກຕັ້ງສະມາຊິກສະພາຍີ່ປຸ່ນ**

ວັນທີ 01/11/2021, ການເລືອກຕັ້ງທົ່ວໄປ ຂອງສະພາຍີ່ປຸ່ນ, ພັກເສລີປະຊາທິປະໄຕ ຍີ່ປຸ່ນ (LDP), ນຳໂດຍທ່ານ Fumio Kishida, ປະທານພັກ ແລະ ພັກ Komeito, ສອງພັກຮ່ວມລັດຖະບານສາມາດຍາດໄດ້ສຽງສ່ວນຫຼາຍໃນສະພາ 293 ທີ່ນັ່ງ ໃນຈຳນວນທັງໝົດ 456 ທີ່ນັ່ງ; ພັກ Constitutional Democratic Party - CPD ທີ່ເປັນພັກຝ່າຍຄ້ານໄດ້ 96 ບ່ອນນັ່ງ, ພັກ Nippon Ishin Japan Innovation Party ໄດ້ 41 ບ່ອນນັ່ງ, ພັກປະຊາທິປະໄຕ ປະຊາຊົນ ໄດ້ 11 ທີ່ນັ່ງ, ສ່ວນພັກກອມມູນິດຍີ່ປຸ່ນໄດ້ 10 ບ່ອນນັ່ງ ແລະ ບັນດາຜູ້ສະໝັກເອກະລາດໄດ້ 10 ທີ່ນັ່ງ. ພັກ LDP ໄດ້ແຕ່ງຕັ້ງທ່ານ Motegi Toshimitsu, ລັດຖະມົນຕີຕ່າງປະເທດ ເປັນເລຂາທິການພັກຄົນໃໝ່ ແລະ ໄດ້ແຕ່ງຕັ້ງ ທ່ານ ໂຢຊິມາສະ ຮາຢາຊິ (Yoshimasa Hayashi) ເປັນລັດຖະມົນຕີຕ່າງປະເທດ ແທນທ່ານ Motegi Toshimitsu. ສ່ວນ ທ່ານ Edano Yukio, ປະທານພັກ CDP ທີ່ເປັນພັກຝ່າຍຄ້ານປະກາດ ຈະລາອອກຈາກຕຳແໜ່ງ ພາຍຫຼັງທີ່ບໍ່ປະສົບຜົນສຳເລັດໃນການເລືອກຕັ້ງສະພາທົ່ວໄປຄັ້ງນີ້. ຂະນະດຽວກັນ, ພັກເສລີປະຊາທິປະໄຕຍີ່ປຸ່ນ ມີແຜນປຶກສາຫາລືພາຍໃນພັກ ກ່ຽວກັບ ການປັບປຸງລັດຖະທຳມະນູນ ແລະການຈັດລຽງຄວາມສຳຄັນ ເພື່ອສ້າງຄວາມເຂັ້ມແຂງໃຫ້ໜ່ວຍງານລັດຖະບານໃນການຮັບມືກັບພາວະສຸກເສີນທີ່ອາດເກີດຂຶ້ນ ເປັນຕົ້ນ ການລະບາດຂອງພະຍາດໂຄວິດ-19 ໂດຍ ພັກເສລີປະຊາທິປະໄຕ ຈະສະຫຼຸບຈຸດສຳຄັນຕ່າງໆ ເພື່ອໃຫ້ປະຊາຊົນຕັດສິນໃຈເອງຕາມຄວາມເໝາະສົມ. ໃນປີ 2018 ຜ່ານມາ, ພັກເສລີປະຊາທິປະໄຕ ໄດ້ສະເໜີແກ້ໄຂລັດຖະທຳມະນູນໃນ 4 ເສົາຫຼັກ ຄື: ກອງກຳລັງປ້ອງກັນຕົນເອງ ເພື່ອປ້ອງກັນການໂຈມຕີຂອງສັດຕູ, ການສ້າງຄຳສັ່ງສຸກເສີນ, ຍຸບການຮ່ວມຕົວການເລືອກຕັ້ງທີ່ປະກອບດ້ວຍຫຼາຍແຂວງ ແລະ ປັບປຸງລະບົບການສຶກສາ.

**6). ເຢຍລະມັນ**

ໃນວັນທີ 8 ພະຈິກ 2021, ພັກສັງຄົມປະຊາທິປະໄຕເຢຍລະມັນ (SPD) ໄດ້ປະກາດຈະຈັດກອງປະຊຸມໃຫຍ່ຂອງພັກ ຢ່າງເປັນທາງການ ໃນວັນທີ 10-12 ທັນວາ 2021 ເພື່ອເລືອກເອົາຜູ້ນຳພັກຄົນໃໝ່ ແທນ ທ່ານ Olaf Scholz ທີ່ຈະຂຶ້ນດຳລົງຕຳແໜ່ງນາຍົກລັດຖະມົນຕີຢລະມັນ ແທນ ທ່ານ ນາງ Angela Merkel ພາຍຫຼັງ ພັກ SPD ໄດ້ຮັບໄຊຊະນະໃນການເລືອກຕັ້ງລັດຖະສະພາ ໃນວັນທີ 26 ກັນຍາ 2021 ຜ່ານມາ. ແຕ່ກ່ອນຈະເປີດກອງປະຊຸມໃຫຍ່ດັ່ງກ່າວຂຶ້ນ, ພັກ SPD ມີແຜນຈັດກອງປະຊຸມພິເສດຂຶ້ນ ໃນວັນທີ 4 ທັນວາ 2021 ເພື່ອກະກຽມໃຫ້ແກ່ກອງປະຊຸມໃຫຍ່ດັ່ງກ່າວ. ແນວໃດກໍຕາມ, ໃນວັນທີ 24 ພະຈິກ 2021, ກອງປະຊຸມສາມຝ່າຍ ທີ່ປະກອບດ້ວຍພັກສັງຄົມປະຊາທິປະໄຕ, ພັກຂຽວ ແລະ ພັກເສລີປະຊາທິປະໄຕ ໄດ້ຕົກລົງການຮ່ວມມືສ້າງຕັ້ງລັດຖະບານປະສົມໃໝ່ ໃນ 4 ປີຂ້າງໜ້າ ພາຍໃຕ້ນາຍົກລັດຖະມົນຕີຄົນໃໝ່, ທ່ານ Olaf Scholz, ເຊິ່ງ ພັກຂຽວ ຈະນຳພາກະຊວງການຕ່າງປະເທດ, ເສດຖະກິດ ແລະ ວຽກປົກປ້ອງສະພາບດິນຟ້າອາກາດ, ສິ່ງແວດລ້ອມ ແລະ ກະສິກຳ. ພັກເສລີປະຊາທິປະໄຕ ຈະນຳພາກະຊວງການເງິນ, ຍຸຕິທຳ, ຄົມມະນາຄົມ, ດີຈີຕ້ອນ, ກະຊວງສຶກສາ ແລະ ຄົ້ນຄວ້າ. ສາມພັກ ໄດ້ຮ່ວມກັນວາງງົບປະມານ 1 ຕື້ເອີໂຣ ຫຼື 1,12 ຕື້ໂດລາສະຫະລັດ ເປັນໂບນັດໃຫ້ແກ່ພະນັກງານແພດ ທີ່ຕໍ່ສູ້ກັບພະຍາດ ໂຄວິດ-19,ພ້ອມທັງສ້າງທີມງານສະເພາະກິດ ເພື່ອຮັບມືກັບພະຍາດລະບາດ. ສາມພັກ ຍັງຈະອອກກົດໝາຍວ່າດ້ວຍການນຳໃຊ້ກັນຊາ ແຕ່ຈະອະນຸຍາດໃຫ້ຈຳໜ່າຍ ສະເພາະຮ້ານທີ່ມີໃບອະນຸຍາດເທົ່ານັ້ນ, ຍັງມີແຜນຈະຢຸດນຳໃຊ້ຖ່ານຫີນ ໃນປີ 2030 ໄວກວ່າແຜນການຜ່ານມາ 8 ປີ ແລະ ຫຼຸດຜ່ອນການໃຊ້ກາກບອນ ໃນປີ 2045.

**7). ປອກຕຸຍການ**

ໃນວັນທີ 4 ພະຈິກ 2021, ປະທານາທິບໍດີປອກຕຸຍການ ໄດ້ປະກາດຍຸບລັດຖະສະພາ ເພື່ອກະກຽມໃຫ້ແກ່ການເລືອກຕັ້ງກ່ອນກຳນົດ ທີ່ຄາດວ່າ ຈະຈັດຂຶ້ນ ໃນວັນທີ 20 ມັງກອນ 2022 ຕາມການຮຽກຮ້ອງ ຂອງທ່ານ Marcelo Rebelo de Sousa, ປະທານາທິບໍດີປອກຕຸຍການ ພາຍຫຼັງ ພັກສັງຄົມນິຍົມ ທີ່ເປັນພັກລັດຖະບານ ມີສຽງສ່ວນໜ້ອຍ ບໍ່ສາມາດຜ່ານ ຮ່າງກົດໝາຍ ວ່າດ້ວຍງົບປະມານປະຈຳປີ 2022 ທີ່ສະເໜີຂຶ້ນລັດຖະສະພາ ໃນໄລຍະທ້າຍເດືອນຕຸລາ 2021 ຜ່ານມາ. ຂະນະດຽວກັນ, ທ່ານ Antonio Costa, ນາຍົກລັດຖະມົນຕີປອກຕຸຍການ ໄດ້ປະກາດ ຈະບໍ່ລາອອກຈາກຕຳແໜ່ງຜູ້ນຳພັກ ສັງຄົມນິຍົມ ແລະ ຈະຫາທຸກວິທີທາງ ເພື່ອໃຫ້ໄດ້ໄຊຊະນະ ໃນການເລືອກຕັ້ງ ທີ່ຈະມາເຖິງນັ້ນ ເພື່ອກັບມາບໍລິຫານປະເທດອີກຄັ້ງ.

**8). ບຸນກາຣີ**

ເນື່ອງຈາກການເລືອກຕັ້ງປະທານາທິບໍດີບຸນກາຣີ ຮອບທີ 01 ໃນວັນທີ 14 ພະຈິກ 2021 ຜ່ານມາ ບໍ່ມີຜູ້ສະໝັກທ່ານໃດໄດ້ຄະແນນສຽງເກີນ 50%, ຈຶ່ງຈັດການເລືອກຕັ້ງ ຮອບທີ 02 ຂຶ້ນ ໃນວັນທີ 21 ພະຈິກ 2021, ຊຶ່ງ

ເປັນການແຂ່ງຂັນລະຫວ່າງ ທ່ານ Rumen Radev, ປະທານາທິບໍດີບຸນກາຣີ ຄົນປັດຈຸບັນ ແລະ ທ່ານ Anastas Gerdzhikov, ອະທິການບໍດີ ມະຫາວິທະຍາໄລໂຊເຟຍ. ຜົນການເລືອກຕັ້ງຮອບ 02 ແມ່ນ ທ່ານ Rumen Radev ໄດ້ຮັບໄຊຊະນະຢ່າງຖ້ວມລົ້ນດ້ວຍຄະແນນສຽງ 66,62%, ສ່ວນທ່ານ Anastas Gerdzhikov ໄດ້ຄະແນນສຽງພຽງແຕ່ 31,90% ແລະ ຈະເຂົ້າພິທີສາບານຕົນເປັນ ປະທານາທິບໍດີບຸນກາຣີ ສະໄໝທີ 02 ພ້ອມກັບ ທ່ານ ນາງ Iliana Iotova ເປັນຮອງປະທານາທິບໍດີ ສະໄໝທີ 02 ໃນວັນທີ 22 ມັງກອນ 2022 ທີ່ຈະມາເຖິງນີ້

**9). ເວເນຊູເອລາ ຈັດການເລືອດຕັ້ງທ້ອງຖິ່ນ**

ໃນວັນທີ 21 ພະຈິກ 2021, ເວເນຊູເອລາ ໄດ້ຈັດການເລືອກຕັ້ງສະພາທ້ອງຖິ່ນຂຶ້ນຢ່າງເປັນທາງການ ເພື່ອເລືອກຕັ້ງເອົາເຈົ້າແຂວງຈຳນວນ 23 ທ່ານ, ເຈົ້າເມືອງຈຳນວນ 335 ທ່ານ, ສະມາຊິກສະພານິຕິບັດຍັດ 253 ທ່ານ ແລະ ສະມາຊິກສະພາຂັ້ນເມືອງ 2471 ທ່ານ. ການເລືອກຕັ້ງຄັ້ງນີ້ ມີຜູ້ມາໃຊ້ສິດເລືອກຕັ້ງ 8,1 ລ້ານກວ່າຄົນ ຈາກຈຳນວນທັງຫມົດ 21 ລ້ານຄົນຂອງຜູ້ມີສິດເລືອກຕັ້ງ ຫລື ປະມານ 41,8 % ແລະ ມີສູນລົງຄະແນນຫຼາຍກວ່າ 30.000 ແຫ່ງໃນທົ່ວປະເທດ. ຜົນການເລືອກຕັ້ງແມ່ນພັກສັງຄົມນິຍົມເອກະພາບເວເນຊູເອລາ (PSUV) ແລະ ພັກພັນທະມິດຂອງລັດຖະບານໄດ້ຮັບໄຊຊະນະ ແລະ ສາມາດຍາດໄດ້ບ່ອນນັ່ງໃນສະພາຕາມລະດັບຄາດໝາຍຄື: ການເລືອກຕັ້ງເຈົ້າແຂວງ ຝ່າຍລັດຖະບານໄດ້ 20 ທ່ານ, ຝ່າຍຄ້ານໄດ້ 03 ທ່ານ. ການເລືອກຕັ້ງເຈົ້າເມືອງ, ສະມາຊິກສະພານິຕິບັດຍັດ ແລະ ສະມາຊິກສະພາຂັ້ນເມືອງ ຝ່າຍລັດຖະບານກໍ່ສາມາດ ຍາດໄດ້ບ່ອນນັ່ງສູງເຖິງ 90.21%. ການເລືອກຕັ້ງທ້ອງຖິ່ນຄັ້ງນີ້ ໄດ້ມີຜູ້ຊ່ຽວຊານຈາກອົງການເລືອກຕັ້ງລະດັບຊາດ, ຊ່ຽວຊານຈາກອາເມລິກາລາຕິນ-ກາຣາບຽນ ແລະ ຈາກສະຫະພາບເອີລົບ ເຂົ້າຮ່ວມສັງເກດການ.

**10). ການເລືອກຕັ້ງປະທານທິບໍດີນິກາຣາກົວ**

ວັນທີ 09/11/2021, ສະພາການເລືອກຕັ້ງນິກາຣາກົວ (supreme Electoin Council - CSE) ໄດ້ປະກາດຜົນການເລືອກຕັ້ງປະທານທິບໍດີນິກາຣາກົວ ທີ່ຈັດຂຶ້ນໃນວັນທີ 7 ພະຈິກ ຜ່ານມາ, ທ່ານ Daniel Ortega, ປະທານາທິບໍດີ ນິກາຣາກົວ ຈາກພັກແນວໂຮມປົດປ່ອຍຊາດຊັງດີນິສຕາ (Sandinista National Liberation Front) ຫຼື FSLN ຊະນະການເລືອກຕັ້ງ ດ້ວຍຄະແນນສຽງ 75,92%, ໄດ້ຄະແນນສຽງຫຼຸດລົງມາ ແມ່ນ ພັກເສລີນິຍົມລັດຖະທຳມະນູນ, ພັກຄຣິດສະຕຽນ ຕາມລຳດັບ. ໄຊຊະນະດັ່ງກ່າວ ຈະເຮັດໃຫ້ ທ່ານ Daniel Ortega ສືບຕໍ່ດຳລົງຕຳແໜ່ງເປັນປະທານາທິບໍດີ ນິກາຣາກົວ ສະໄໝທີ 4 ລວມເປັນ 20 ປີ ຕິດຕໍ່ກັນ. ນອກຈາກການເລືອກຕັ້ງປະທານາທິບໍດີແລ້ວ ຍັງໄດ້ເລືອກເອົາສະມາຊິກສະພາແຫ່ງຊາດ 90 ຄົນ ແລະ ສະມາຊິກສະພາອາເມລິກາກາງອີກ 20 ຄົນ. ຜູ້ນຳກູບາ, ເວເນຊູເອລາ, ລັດເຊຍ ແລະ ອະດີດຜູ້ນຳໂບລິວີ ໄດ້ສະແດງຈຸດຢືນສືບຕໍ່ສະໜັບສະໜູນການປະຕິວັດນິກາຣາກົວ ແລະ ຮັບຮູ້ວ່າການເລືອກຕັ້ງດັ່ງກ່າວ ເປັນໄປຢ່າງປະຊາທິປະໄຕ ແລະ ຖືກຕ້ອງຕາມກົດໝາຍການເລືອກຕັ້ງຢ່າງແທ້ຈິງ. ຂະນະດຽວກັນ, ທ່ານ ໂຈ ໄບເດີນ, ປະທານາທິບໍດີ ອາເມລິກາ ໄດ້ລົງນາມໃນຍັດຕິທີ່ມີຜົນທາງກົດໝາຍ ວ່າດ້ວຍການເພີ່ມມາດຕະການລົງໂທດຕໍ່ລັດຖະບານນິກາຣາກົວ ທີ່ນຳໂດຍ ທ່ານ Daniel Ortega. ນອກຈາກອາເມລິກາ, ຍັງມີອັງກິດ, ແອັດສະປາຍ, ໂກສະຕາລິກາ ແລະ ບັນດາປະເທດພັນທະມິດຕາເວັນຕົກອື່ນໆ ທີ່ປະຕິເສດຜົນການເລືອກຕັ້ງດັ່ງກ່າວ.

ໃນວັນທີ 17 ພະຈິກ 2021, ລັດຖະບານນິກາຣາກົວໄດ້ປະກາດຖອນໂຕອອກຈາກອົງການລັດອາເມລິກາ ເພາະເຫັນວ່າ ອົງການດັ່ງກ່າວ ບໍ່ສາມາດຊ່ວຍເຫຼືອປະເທດສະມາຊິກໄດ້ ແລະ ອົງການດັ່ງກ່າວ ເປັນເຄື່ອງມືຮັບໃຊ້ໃຫ້ແກ່ປະເທດໃດໜຶ່ງ, ການປິດລ້ອມ ແລະ ການແຊກແຊງກຳລັງທາງການທະຫານ ພ້ອມທັງໃຊ້ຄວາມຮຸນແຮງໃນການໂຈມຕີລະບົບການເລືອກຕັ້ງຂອງປະເທດທີ່ມີຄວາມເຫັນທີ່ແຕກຕ່າງທາງດ້ານການເມືອງ.

**11). ຈີເລ**

ວັນທີ 21 ພະຈິກ 2021 ຜ່ານມາ, ຈີເລ ໄດ້ຈັດໃຫ້ມີການເລືອກຕັ້ງປະທານາທິບໍດີຂຶ້ນ ມີຜູ້ສະໝັກເລືອກຕັ້ງປະທານາທິບໍດີຄັ້ງນີ້ 07 ທ່ານ, ມີປະຊາຊົນທີ່ມີສິດປ່ອນບັດເລືອກຕັ້ງຫຼາຍກວ່າ 15 ລ້ານຄົນ ຈາກພົນລະເມືອງ 19.678.310 ຄົນ. ພາຍຫຼັງສຳເລັດການປ່ອນບັດເລືອກຕັ້ງ, ຄະນະກຳມະການບໍລິການເລືອກຕັ້ງຂອງຈີລີ ໄດ້ປະກາດວ່າ: ທ່ານ Jos é Antonio Kast, ປະທານພັກຣີພັບລີກັນຈີເລ PARTIDO REPUBLICANO (PLR) ທີ່ເປັນພັກຝ່າຍຂວາໄດ້ຮັບໄຊຊະນະດ້ວຍຄະແນນ 27,92%, ອັນດັບທີສອງແມ່ນ ທ່ານ Gabriel Boric, ຫົວໜ້າພັກລວມສັງຄົມຈີເລ Convergencia Social (CS) ພັກຝ່າຍຊ້າຍ ໄດ້ຄະແນນ 25,80%. ອີງໃສ່ຜົນການເລືອກຕັ້ງ

ໃນຮອບທີ 01 ແລະ ກົດໝາຍວ່າດ້ວຍການເລືອກຕັ້ງປະທານາທິບໍດີຈີເລ ແມ່ນຈະມີການເລືອກຕັ້ງຮອບທີ 02 ຊຶ່ງຈະຈັດຂຶ້ນໃນວັນທີ 19 ທັນວາ 2021. ພາຍຫຼັງສຳເລັດການເລືອກຕັ້ງໃນຮອບນີ້ ຈະມີການແຕ່ງຕັ້ງສະມາຊິກສະພາສູງ ແລະ ສະມາຊິກສະພາຕ່ຳ.

**12). ອາກຊັງຕິນ**

ວັນທີ 14 ພະຈິກ 2021, ປະເທດ ອາກຊັງຕິນ ໄດ້ຈັດການເລືອກຕັ້ງກາງສະໄໝ ເພື່ອເລືອກເອົາສະມາຊິກລັດຖະສະພາ; ໃນນີ້ ໄດ້ເລືອກເອົາສະມາຊິກສະພາຕ່ຳ 127 ບ່ອນນັ່ງ ຈາກ ທັງໝົດ 257 ບ່ອນນັ່ງ ແລະ ສະມາຊິກສະພາສູງ 24 ບ່ອນນັ່ງ ຈາກທັງໝົດ 72 ບ່ອນນັ່ງ; ການເລືອກຕັ້ງຄັ້ງນີ້ມີປະຊາຊົນທີ່ມີສິດປ່ອນບັດເລືອກຕັ້ງປະມານ 34 ລ້ານຄົນ ກວມ 70% ຂອງປະຊາກອນທັງໝົດ 45 ລ້ານກວ່າຄົນ. ຜົນການເລືອກຕັ້ງມີຄື: ພັກ Justicialist Party, ຂອງທ່ານ Alberto Fernandez ປະທານາທິບໍດີ ອາກຊັງຕິນ ຄົນປະຈຸບັນ ມີບ່ອນນັ່ງໃນສອງສະພາສູງ ຫຼຸດລົງ ຈາກ 41 ບ່ອນນັ່ງ ເປັນ 35 ບ່ອນນັ່ງ ແລະ ສະພາຕ່ຳ ຫຼຸດຈາກ 120 ບ່ອນນັ່ງ ເປັນ 118 ບ່ອນນັ່ງ; ພັກຝ່າຍຄ້ານທີ່ເປັນກຸ່ມພັກການເມືອງ ອານຸລັກນິຍົມ ທີ່ມີຊື່ວ່າ: ຮ່ວມກັນເພື່ອການປ່ຽນແປງ (Together for Change) ບວກກັບພັກນ້ອຍອື່ນໆ ໄດ້ບ່ອນນັ່ງໃນສະພາຕ່ຳ 139 ບ່ອນນັ່ງ (ເພີ່ມຂຶ້ນ 02 ບ່ອນນັ່ງ) ແລະ ສະພາສູງເພີ່ມຈາກ 31 ບ່ອນນັ່ງເປັນ 37 ບ່ອນນັ່ງ. ຜົນຂອງການເລືອກຕັ້ງດັ່ງກ່າວ ໄດ້ເຮັດໃຫ້ຝ່າຍຄ້ານ ມີສຽງສ່ວນຫຼາຍໃນສະພາ ນັບແຕ່ນີ້ເຖິງທ້າຍປີ 2023.

ແຫຼ່ງຂ່າວອ້າງອີງ : Vietnam News, Vietnam- Express, Xinhua, CNA, Global Times, CRI, RT, South China Morning Post, Kpl, Sputnik, Yonhap, BBC, Euronews, AFP, NHK, Aljazeera, CGTN, TaiwanNews, TNN, Daily News, The Irrawaddy

# II. ການເຄື່ອນໄຫວວຽກງານ ຂອງການນໍາ ພັກ ປປ ລາວ

## 1. ພັກກອມມູນິດຈີນ ແຈ້ງຜົນສໍາເລັດຂອງ ກອງປະຊຸມຄົບຄະນະກໍາມະການສູນກາງພັກກອມມູນິດຈີນ ເທື່ອທີ 6 ສະໄໝທີ XIX ຕໍ່ສູນກາງພັກ ປປ ລາວ




ໂດຍອີງຕາມແຜນການຮ່ວມມືລະຫວ່າງ ພັກປະຊາຊົນປະຕິວັດລາວ ແລະ ພັກກອມມູນິດຈີນ ປະຈໍາປີ 2021, ໃນວັນທີ 25 ພະຈິກ 2021 ນີ້, ຕາງໜ້າສູນກາງພັກກອມມູນິດຈີນ ໂດຍແມ່ນ ສະຫາຍ ຊົ້ງທາວ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ ໄດ້ຈັດກອງປະຊຸມທາງໄກແຈ້ງເນື້ອໃນຕົ້ນຕໍຂອງກອງປະຊຸມຄົບຄະນະ ຄັ້ງທີ 6 ສະໄໝທີ XIX ຂອງຄະນະກໍາມະການສູນກາງພັກກອມມູນິດຈີນ ໃຫ້ ສູນກາງພັກ ປປ ລາວ ຊາບ ໂດຍມີ ສະຫາຍ ບຸນທອງ ຈິດມະນີ, ກໍາມະການກົມການເມືອງສູນກາງພັກ, ຜູ້ປະຈໍາການຄະນະເລຂາທິການສູນກາງພັກ, ຮອງປະທານປະເທດ ແຫ່ງ ສປປ ລາວ ໃຫ້ກຽດເຂົ້າຮ່ວມຮັບຟັງ, ພ້ອມດ້ວຍການນໍາຂັ້ນສູງຂອງພັກ, ລັດລາວ ຈາກອົງການ-ພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມ.

ໃນກອງປະຊຸມ, ສະຫາຍ ຊົ້ງທາວ ໄດ້ແຈ້ງໃຫ້ຝ່າຍລາວຮັບຊາບ ກ່ຽວກັບເນື້ອໃນຕົ້ນຕໍຂອງກອງປະຊຸມຄົບຄະນະ ຄັ້ງທີ 6 ສະໄໝທີ XIX ຂອງຄະນະກໍາມະການສູນກາງພັກກອມມູນິດຈີນ ທີ່ຈັດຂຶ້ນແຕ່ວັນທີ 8-11 ພະຈິກ 2021 ຜ່ານມາ, ເຊິ່ງກອງປະຊຸມ ໄດ້ຮັບຮອງເອົາ "ມະຕິຕົກລົງ ຂອງ ສູນກາງພັກກອມມູນິດຈີນ ກ່ຽວກັບ ຜົນງານອັນໃຫຍ່ຫຼວງ ແລະ ບົດຮຽນປະຫວັດສາດຈາກການບຸກບືນສູ້ຊົນຂອງພັກໃນໄລຍະ 100 ປີຜ່ານມາ", ໂດຍໄດ້ຍົກໃຫ້ເຫັນຜົນສໍາເລັດ ແລະ ປະສົບການທາງປະຫວັດສາດອັນຍິ່ງໃຫຍ່ຂອງພັກກອມມູນິດຈີນ ໃນໄລຍະການສູ້ຊົນຜ່ານຜ່າ ຕະຫຼອດໄລຍະ 100 ປີ ຜ່ານມາ, ທັງໄດ້ຍົກໃຫ້ເຫັນເຖິງຈຸດພິເສດຂອງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນໃນຍຸກສະໄໝໃໝ່. ພ້ອມນັ້ນ, ກອງປະຊຸມຍັງໄດ້ເອກະພາບຮັບຮອງເອົາ "ມະຕິຕົກລົງ ກ່ຽວກັບ ການໄຂກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XX ຂອງພັກກອມມູນິດຈີນ" ໃນທ້າຍປີ 2022 ທີ່ຈະມາເຖິງ.

ສະຫາຍ ຊົ້ງທາວ ກ່າວວ່າ ໃນໄລຍະ 100 ປີ ຜ່ານມາ, ຊາວພັກກອມມູນິດຈີນ ແລະ ປະຊາຊົນຈີນ ໄດ້ສືບຕໍ່ສູ້ຊົນຜ່ານຜ່າ, ເຮັດໃຫ້ປະຊາຊາດຈີນ ໄດ້ເລີ່ມຕົ້ນຈາກການລຸກຂຶ້ນ, ເຕີບໃຫຍ່ ແລະ ເຂັ້ມແຂງຂຶ້ນມາ ດ້ວຍບາດກ້າວກະໂດດ, ໂດຍສະເພາະ ນັບແຕ່ກອງປະຊຸມໃຫຍ່ ຄັ້ງທີ XVIII ຂອງພັກກອມມູນິດຈີນເປັນຕົ້ນມາ, ສູນກາງພັກກອມມູນິດຈີນ ທີ່ມີ ສະຫາຍ ສີຈິ້ນຜິງ ເປັນແກນກາງ ໄດ້ເຕົ້າໂຮມຄວາມສາມັກຄີເປັນປຶກແຜ່ນ ນໍາພາປະຊາຊົນຈີນບຸກເບີກເປີດສັກກະລາດໃໝ່ ແຫ່ງການກໍ່ສ້າງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ ໃນຍຸກສະໄໝໃໝ່, ສ້າງສໍາເລັດສັງຄົມອິ່ມໜໍາສໍາລານຮອບດ້ານ ແລະ ເປີດຂະບວນການໃໝ່ແຫ່ງການສ້າງເປັນປະເທດສັງຄົມນິຍົມທີ່ທັນ

ສະໄໝຢ່າງຮອບດ້ານ. ພາລະກິດຂອງພັກ ແລະ ຂອງປະເທດຊາດຈີນ ໄດ້ມີຜົນສຳເລັດທີ່ເປັນລັກສະນະປະຫວັດສາດ, ມີການປ່ຽນແປງທີ່ມີລັກສະນະປະຫວັດສາດ, ອັນພື້ນຖານທີ່ສຸດກໍ່ແມ່ນຍ້ອນມີ ສະຫາຍ ສີ ຈິ້ນຜິງ ເປັນແກນກາງຂອງພັກ ໃນການນຳພາຊີ້ນຳຂອງສູນກາງພັກ, ຍ້ອນມີ ແນວຄິດສີຈິ້ນຜິງ ວ່າດ້ວຍ ສັງຄົມນິຍົມທີ່ມີສີສັນພິເສດຂອງຈີນໃນຍຸກສະໄໝໃໝ່ ເປັນເຂັມທິດຊີ້ນຳ. ພຶດຕິກຳຕົວຈິງ ຢັ້ງຢືນວ່າ ພັກກອມມູນິດຈີນ ໄດ້ກຳນົດເອົາ ສະຫາຍ ສີຈິ້ນຜິງ ເປັນແກນກາງສູນກາງພັກ, ເປັນແກນນຳຂອງທົ່ວພັກ, ໄດ້ກຳນົດຖານະບົດບາດຊີ້ນຳ ຂອງແນວຄິດສີຈິ້ນຜິງ ວ່າດ້ວຍສັງຄົມນິຍົມທີ່ມີສີສັນພິເສດຂອງຈີນໃນຍຸກສະໄໝໃໝ່, ໄດ້ສ່ອງແສງໃຫ້ເຫັນເຖິງຄວາມມຸ່ງມາດປາດຖະໜາຮ່ວມກັນຂອງທົ່ວພັກ, ທົ່ວກອງທັບ ແລະ ປະຊາຊົນທົ່ວທັງຊາດ, ເຊິ່ງມີຄວາມໝາຍສຳຄັນພິເສດທີ່ເປັນການຕັດສິນຕໍ່ການພັດທະນາພາລະກິດຂອງພັກ ແລະ ປະເທດຊາດໃນຍຸກສະໄໝໃໝ່ ແລະ ການຊຸກຍູ້ຂະບວນການຟື້ນຟູຄວາມຈະເລີນຮຸ່ງເຮືອງຂອງປະຊາຊາດຈີນ. ສ່ວນ ສະຫາຍ ບຸນທອງ ຈິດມະນີ, ກຳມະການກົມການເມືອງສູນກາງພັກ, ຜູ້ປະຈຳການຄະນະເລຂາທິການສູນກາງພັກ, ຮອງປະທານປະເທດ ແຫ່ງ ສປ ລາວ ໄດ້ຕາງໜ້າໃຫ້ແກ່ ສູນກາງພັກ ປປ ລາວ ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນສຳເລັດຂອງກອງປະຊຸມຄົບຄະນະຄັ້ງທີ 6 ສະໄໝທີ XIX ຂອງສູນກາງພັກກອມມູນິດຈີນ ວ່າກອງປະຊຸມຄົບຄະນະຄັ້ງນີ້ ໄດ້ໄຂຂຶ້ນໃນໄລຍະທີ່ມີຄວາມໝາຍສຳຄັນທາງປະຫວັດສາດຂອງພັກກອມມູນິດຈີນ ກໍຄື ໃນໂອກາດຄົບຮອບ 100 ປີ ຂອງ ການສ້າງຕັ້ງພັກກອມມູນິດຈີນ.  ໂອກາດດັ່ງກ່າວ, ສອງຝ່າຍໄດ້ຕີລາຄາສູງຕໍ່ ການພົວພັນຮ່ວມມືແບບຄູ່ຮ່ວມຍຸດທະສາດ ຮອບດ້ານໝັ້ນຄົງ, ຍາວນານ ຕາມທິດ 4 ດີ ແລະ ການເປັນຄູ່ຮ່ວມຊະຕາກຳ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຈີນ, ຈີນ-ລາວ. ເຖິງວ່າສະພາບການພາກພື້ນ ແລະ ສາກົນ ມີການປ່ຽນແປງຢ່າງສະຫຼັບຊັບຊ້ອນ, ການແຜ່ລະບາດຂອງພະຍາດໂຄວິດ-19 ສົ່ງຜົນກະທົບໂດຍກົງຕໍ່ການໄປມາຫາສູ່ ແລະ ພົບປະກັນແບບເຊິ່ງໜ້າກໍ່ຕາມ, ແຕ່ການພົວພັນຮ່ວມມືສອງຝ່າຍພວກເຮົາ ຍັງສືບຕໍ່ໄດ້ຮັບການເສີມຂະຫຍາຍສູງຂຶ້ນເລື້ອຍໆ, ບັນດາທິດທາງການຮ່ວມມືທີ່ການນຳຂັ້ນສູງສອງຝ່າຍ ໄດ້ເຫັນດີເປັນເອກະພາບກັນຜ່ານມານັ້ນ ກໍ່ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ແລະ ມີໝາກມີຜົນຕົວຈິງ, ອັນພິເສດແມ່ນ ການຊຸກຍູ້ໂຄງການສ້າງທາງລົດໄຟ ລາວ-ຈີນ ສຳເລັດການກໍ່ສ້າງ ແລະ ຈະເປີດນຳໃຊ້ໃນຕົ້ນເດືອນທັນວາທີ່ຈະມາເຖິງນີ້.

## II. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄຕພ

### 1. ພິທີມອບ - ຮັບໜ້າທີ່ ຄະນະບໍລິຫານງານ ສະມາຄົມມິດຕະພາບ ລາວ-ຈີນ ຂັ້ນສູນກາງ ລະຫວ່າງ ຊຸດເກົ່າ ແລະ ຊຸດໃໝ່







ໃນວັນທີ 29 ພະຈິກ 2021, ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ມີພິທີມອບ - ຮັບໜ້າທີ່ ຄະນະບໍລິຫານງານສະມາຄົມມິດຕະພາບ ລາວ-ຈີນ ຂັ້ນສູນກາງ ຊຸດເກົ່າ ແລະ ຊຸດໃໝ່  ລະຫວ່າງ ທ່ານ ປອ. ຄຳມະນີ ອິນທິລາດ, ອະດີດລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່, ປະທານສະມາຄົມມິດຕະພາບ ລາວ - ຈີນ ຂັ້ນສູນກາງ ຜູ້ເກົ່າ ແລະ ທ່ານ ປອ. ເພັດ ພົມພິພັກ, ກຳມະການສູນກາງພັກ, ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້,

ປະທານສະມາຄົມມິດຕະພາບ ລາວ-ຈີນ ຜູ້ໃໝ່, ໂດຍການໃຫ້ກຽດເຂົ້າຮ່ວມ ຂອງ ທ່ານ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ. ມີບັນດາທ່ານຄະນະບໍລິຫານງານສະມາຄົມມິດຕະພາບ ລາວ-ຈີນ ຂັ້ນສູນກາງ ຊຸດເກົ່າ ແລະ ຊຸດໃໝ່ ພ້ອມດ້ວຍພາກສ່ວນກ່ຽວຂ້ອງຈຳນວນໜຶ່ງເຂົ້າຮ່ວມ. ທ່ານ ປອ. ຄຳມະນີ ອິນທິລາດ, ອະດີດລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່, ປະທານສະມາຄົມມິດຕະພາບ ລາວ - ຈີນ ຂັ້ນສູນກາງ ຜູ້ເກົ່າ ໄດ້ສະຫຼຸບຕີລາຄາການນຳພາ-ຊີ້ນຳ ການຈັດຕັ້ງປະຕິບັດວຽກງານ ແລະ ການເຄື່ອນໄຫວໂດຍຫຍໍ້ ຂອງ ສະມາຄົມມິດຕະພາບ ໃນໄລຍະ 5 ປີ ຜ່ານມາ ໂດຍໄດ້ຍົກໃຫ້ເຫັນເຖິງຜົນສຳເລັດໃນການເຄື່ອນໄຫວກິດຈະກຳຕ່າງໆຮ່ວມກັບ ສະຖານເອກອັກຄະລັດຖະທູດແຫ່ງ ສປ ຈີນ ປະຈຳ ສປປ ລາວ, ສະຖານກົງສູນໃຫ່ຍແຫ່ງ ສປ ຈີນ ປະຈຳບັນດາແຂວງ, ນັກສຶກສາຈີນທີ່ສຶກສາຢູ່ລາວ ແລະ ສະມາຄົມຊາວຈີນຢູ່ລາວເນື່ອງໃນໂອກາດວັນສຳຄັນຕ່າງໆຂອງພັກ, ຂອງຊາດ ຂອງ ສປປ ລາວ ແລະ ສປ ຈີນ ແລະ ກິດຈະກຳຊ່ວຍເຫຼືອສັງຄົມ ເປັນຕົ້ນແມ່ນໄລຍະການແຜ່ລະບາດ ຂອງ ພະຍາດໂຄວິດ-19 ສະມາຄົມມິດຕະພາບ ລາວ-ຈີນ ໄດ້ເປັນເຈົ້າການລະດົມທຶນຮອນ ແລະ ອຸປະກອນການແພດຢ່າງຫຼວງຫຼາຍ ເພື່ອຊ່ວຍເຫຼືອສັງຄົມ. ນອກນັ້ນ, ຍັງໄດ້ເຄື່ອນໄຫວຊຸກຍູ້ສະໜັບສະໜູນ, ສົ່ງເສີມການພົວພັນຮ່ວມມືຮອບດ້ານ ລະຫວ່າງ ປະຊາຊົນສອງຊາດລາວ ແລະ ຈີນ. ໃນຕອນທ້າຍ, ທ່ານ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ກໍ່ໄດ້ໂອ້ລົມຕໍ່ພິທີດັ່ງກ່າວ, ເຊິ່ງໄດ້ຍ້ອງຍໍ-ຊົມເຊີຍຜົນງານ ຂອງປະທານສະມາຄົມມິດຕະພາບ ລາວ-ຈີນ ຜູ້ເກົ່າ ພ້ອມດ້ວຍຄະນະ ທີ່ໄດ້ສຸມສະຕິປັນຍາ, ເຫື່ອແຮງ ນຳພາ-ຊີ້ນຳ ການເຄື່ອນໄຫວວຽກງານ ຂອງ ສະມາຄົມມິດຕະພາບ ລາວ-ຈີນ ໃຫ້ມີຜົນສຳເລັດຫຼາຍດ້ານໂດຍສະເພາະການເຄື່ອນໄຫວສ້າງກິດຈະກຳຕ່າງໆ ເພື່ອສົ່ງເສີມໃຫ້ປະຊາຊົນສອງຊາດລາວ ແລະ ຈີນ ມີການພົວພັນໄປມາຫາສູ່ນັບມື້ຫຼາຍຂຶ້ນ ແລະ ການສຶກສາອົບຮົມ ປະຊາຊົນ ກໍ່ຄືຄົນຮຸ່ນໜຸ່ມ ຂອງສອງປະເທດຊາດ ໃຫ້ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງຕໍ່ສາຍພົວພັນມິດຕະພາບທີ່ເປັນມູນເຊື້ອອັນດີງາມຂອງສອງຊາດ ລາວ ແລະ ຈີນ.

**2. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບການເຂົ້າອວຍພອນວັນຊາດ ຂອງ ເອກອັກຄະລັດຖະທູດ ສສ ຫວຽດນາມ ປະຈຳ ສປປ ລາວ**



ວັນທີ 29 ພະຈິກ 2021 ທີ່ສຳນັກງານ ຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບ ສະຫາຍ ຫງວຽນບ່າຮຸ່ງ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມແຫ່ງ ສສ ຫວຽດນາມ ປະຈຳ ສປປ ລາວ ພ້ອມດ້ວຍອ້າຍນ້ອງພະນັກງານສະຖານທູດ ເຂົ້າອວຍພອນເນື່ອງໃນໂອກາດວັນສະຖາປະນາ ສປປ ລາວ ຄົບຮອບ 46 ປີ.

ໃນໂອກາດດັ່ງກ່າວ ສະຫາຍ ຫງວຽນບ່າຮຸ່ງ ໄດ້ສະແດງຄວາມຊົມຊື່ນ ແລະ ຕີລາຄາສູງ ຕໍ່ບັນດາຜົນສຳເລັດໃນການສ້າງສາພັດທະນາ ເສດຖະກິດ-ສັງຄົມ ຂອງປະຊາຊົນລາວອ້າຍນ້ອງ ຍາດມາໄດ້ຕະຫຼອດໄລຍະ 46 ປີ ຜ່ານມາ, ຊົມເຊີຍຜົນສຳເລັດ ກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ປປ ລາວ ຄັ້ງທີ 3 ສະໄໝທີ XI ກໍ່ຄືກອງ

ປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໃນເວລາບໍ່ດົນຜ່ານມາ ແລະ ການຮັບມືກັບການແຜ່ລະບາດພະຍາດ ໂຄວິດ-19 ໃນປະຈຸບັນ ພາຍໃຕ້ການນໍາພາອັນຖືກຕ້ອງ ແລະ ສະຫຼາດສ່ອງໃສ ຂອງພັກ ປະຊາຊົນປະຕິວັດລາວ ອັນໄດ້ເຮັດໃຫ້ ສປປ ລາວ ສືບຕໍ່ມີສະຖຽນລະພາບ ທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ, ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບມີຄວາມເຂັ້ມແຂງ, ຖານະບົດບາດ ແລະ ອິດທິພົນຂອງພັກ, ລັດ ສປປ ລາວ ສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ. ສະຫາຍ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຂອບໃຈ ຕໍ່ສະຫາຍ ຫງວຽນບ່າຮຸ່ງ ທີ່ໄດ້ນໍາພາຄະນະມາອວຍພອນ ເນື່ອງໃນໂອກາດ ວັນສະຖາປະນາ ສປປ ລາວ ຄົບຮອບ 46 ປີໃນຄັ້ງນີ້ ແລະ ສະແດງຄວາມຊົມເຊີຍຕໍ່ບັນດາຜົນສໍາເລັດອັນໃຫຍ່ຫຼວງ ແລະ ຮອບດ້ານ ທີ່ປະຊາຊົນຫວຽດນາມອ້າຍນ້ອງຍາດມາໄດ້ ພາຍໃຕ້ການນໍາພາອັນປີຊາສາມາດ ແລະ ສະຫຼາດສ່ອງໃສຂອງພັກກອມມູນິດຫວຽດນາມ, ໂດຍສະເພາະ ຜົນສໍາເລັດໃນການສະກັດກັ້ນການແຜ່ລະບາດຂອງພະຍາດ ໂຄວິດ-19, ການສືບຕໍ່ຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ ຄັ້ງທີ XIII ຂອງພັກ ເພື່ອນໍາເອົາ ສສ ຫວຽດນາມ ກ້າວຂຶ້ນສູ່ທ່ວງທ່າໃໝ່ ທີ່ເຂັ້ມແຂງ ແລະ ໜັກແໜ້ນຮອບດ້ານ, ເຊື່ອໝັ້ນວ່າ ພາຍໃຕ້ການຊີ້ນໍາ-ນໍາພາອັນຖືກຕ້ອງ ແລະ ສະຫຼາດສ່ອງໃສຂອງພັກກອມມູນິດຫວຽດນາມ, ປະຊາຊົນຫວຽດນາມ ອ້າຍນ້ອງຈະສາມາດຍາດໄດ້ໄຊຊະນະໃໝ່ໃຫຍ່ຫຼວງກວ່າເກົ່າ ໃນການປົກປັກຮັກສາ, ພັດທະນາ ແລະ ສ້າງສາປະເທດຊາດ ກໍ່ຄືການຕໍ່ສູ້ຕ້ານ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດ ໂຄວິດ-19 ຢູ່ ສສ ຫວຽດນາມ; ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ການປະກອບສ່ວນຂອງສະຖານທູດ, ໂດຍສະເພາະ ການປະກອບສ່ວນຂອງສະຫາຍທູດ ເຂົ້າໃນການຊຸກຍູ້ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບ ລາວ-ຫວຽດນາມ ໃນໄລຍະການປະຕິບັດໜ້າທີ່ການທູດຢູ່ ສປປ ລາວ. ພ້ອມນັ້ນ, ສະຫາຍຍັງໄດ້ຕາງໜ້າ ພັກ, ລັດຖະບານ ກໍ່ຄືປະຊາຊົນລາວບັນດາເຜົ່າ ສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນ ຕໍ່ພັກ ລັດ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ທີ່ໄດ້ໃຫ້ການຊ່ວຍເຫຼືອອັນລໍ້າຄ່າ, ທັນການ ແລະ ມີປະສິທິຜົນ ແກ່ພາລະກິດຕໍ່ສູ້ປົດປ່ອຍຊາດໃນເມື່ອກ່ອນ ກໍ່ຄືໃນພາລະກິດ ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຂອງລາວໃນປະຈຸບັນ, ໂດຍສະເພາະແມ່ນການຊ່ວຍເຫຼືອໃນການຮັບມື ຕ້ານການລະບາດຂອງພະຍາດ ໂຄວິດ - 19 ໃນປະຈຸບັນ.

## 3. ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງເອກອັກຄະລັດຖະທູດ ສປປ ເກົາຫຼີ ປະຈໍາ ສປປ ລາວ



ໃນວັນທີ 8 ພະຈິກ 2021, ສະຫາຍ ສົມພອນ ສີຈະເລີນ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບ ການເຂົ້າຢ້ຽມຂໍ່ານັບ ຂອງ ສະຫາຍ ລີຢອງໂຊລ, ເອກອັກຄະລັດຖະທູດ ສປປ ເກົາຫຼີ ປະຈໍາ ສປປ ລາວ, ເຊິ່ງສະຫາຍທູດ ໄດ້ຕາງໜ້າໃຫ້ ສະຫາຍ ກິມເຈີງອຸນ, ປະທານພັກແຮງງານເກົາຫຼີ ມາມອບກະຕ່າອວຍພອນວັນຄ້າຍວັນເກີດຂອງ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ພັກ ປປ ລາວ,ປະທານປະເທດແຫ່ງ ສປປ ລາວ ຄົບຮອບ 76 ປີ.

**4. ຄະນະຜູ້ແທນພັກ ປປ ລາວ ເຂົ້າຮ່ວມພິທີສະເຫຼີມສະຫຼອງວັນສ້າງຕັ້ງກອງປະຊຸມສາກົນບັນດາພັກການເມືອງໃນອາຊີ ຄົບຮອບ 20 ປີ ຜ່ານວີດີໂອທາງໄກ**




ຄະນະຜູ້ແທນພັກ ປປ ລາວ ນຳໂດຍ ສະຫາຍ ສົມພອນ ສີຈະເລີນ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມພິທີສະເຫຼີມສະຫຼອງວັນສ້າງຕັ້ງກອງປະຊຸມສາກົນບັນດາພັກການເມືອງໃນອາຊີ (International Conference of Asian Political Parties ຫລື ICAPP) ຄົບຮອບ 20 ປີ, ເຊິ່ງໄດ້ຈັດຂຶ້ນໃນວັນທີ 8 ພະຈິກ 2021 ໂດຍຜ່ານຮູບແບບວີດີໂອທາງໄກ. ໃນພິທີສະເຫຼີມສະຫຼອງຄັ້ງນີ້ ມີບັນດາຜູ້ແທນພັກການເມືອງສະມາ ຊິກຂອງ ICAPP ແລະ ບັນດາສະມາຊິກຄະນະປະຈຳຂອງ ICAPP, ຜູ້ຕາງໜ້າຈາກອົງການບັນດາພັກການເມືອງໃນອາເມລິກາລາຕິນ ແລະ ກາຣີບຽນ (COPPPAL), ອົງການສະພາບັນດາພັກການເມືອງອາຟຣິກາ (CAPP) ແລະ ລັດຖະສະ ພາສະຫະພາບເອີຣົບ ເຂົ້າຮ່ວມ.

ໃນໂອກາດການສະເຫຼີມສະຫຼອງດັ່ງກ່າວ, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດແຫ່ງ ສປປ ລາວ ໄດ້ສົ່ງສານຊົມເຊີຍເຖິງ ອົງການ ICAPP ໂດຍໄດ້ຕີລາຄາສູງ ແລະ ຊົມເຊີຍບົດບາດສຳຄັນ ແລະ ຜົນສຳເລັດອັນພົ້ນເດັ່ນທີ່ ICAPP ຍາດມາໄດ້ໃນຊ່ວງເຂດຕ່າງໆ ຕະຫຼອດໄລຍະ 2 ທົດສະວັດຜ່ານມາ, ອັນໄດ້ເຮັດໃຫ້ ICAPP ນັບມື້ນັບເຕີບໃຫຍ່ເຂັ້ມແຂງ ແລະ ມີບົດບາດສູງຂຶ້ນໃນເວທີການເມືອງພາກພື້ນ ແລະ ສາກົນ, ປະກອບສ່ວນສຳຄັນເຂົ້າໃນການເສີມສ້າງຄວາມເຂົ້າອົກເຂົ້າໃຈ ແລະ ໄວ້ເນື້ອເຊື່ອໃຈຊຶ່ງກັນ ແລະ ກັນ, ການຊຸກຍູ້ການຮ່ວມມືໃນດ້ານຕ່າງໆ ແລະ ການສ້າງສະພາບແວດລ້ອມອັນເອື້ອອຳນວຍໃຫ້ແກ່ສັນຕິພາບ, ສະຖຽນລະພາບ, ການຮ່ວມມືເພື່ອການພັດທະນາທີ່ຍືນຍົງ ແລະ ຄວາມຈະເລີນຮຸ່ງເຮືອງຂອງປະເທດຕ່າງໆໃນພາກພື້ນ ແລະ ໃນໂລກ; ຢືນຢັນການສືບຕໍ່ຍຶດໝັ້ນຂອງພັກ ປປ ລາວ ໃນການເສີມຂະຫຍາຍການພົວພັນຮ່ວມມື ລະຫວ່າງພັກກັບພັກ ແລະ ລັດກັບລັດ ບົນພື້ນຖານເຄົາລົບເອກະລາດ, ອຳນາດອະທິປະໄຕ ແລະ ຕ່າງຝ່າຍຕ່າງມີຜົນປະໂຫຍດ; ການສືບຕໍ່ຮ່ວມມືຢ່າງໃກ້ຊິດ ກັບບັນດາພັກການເມືອງໃນອາຊີ ເພື່ອປະກອບສ່ວນເຂົ້າໃນການເສີມສ້າງຄວາມເຂັ້ມແຂງຂອງກົນໄກ ICAPP ແນໃສ່ຮ່ວມກັນຮັບມືກັບສິ່ງທ້າທາຍ ແລະ ບັນຫາເຄັ່ງຮ້ອນຕ່າງໆ ລວມທັງການແກ້ໄຂການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19, ການປ່ຽນແປງຂອງສະພາບດິນຟ້າອາກາດ, ການກໍ່ອາດສະຍາກຳຂ້າມຊາດ ແລະ ອື່ນໆ ໃຫ້ມີປະສິດທິຜົນຍິ່ງຂຶ້ນ ຄຽງຄູ່ກັບການຂຸດຄົ້ນບັນດາທ່າແຮງບົ່ມຊ້ອນໃນການຮ່ວມມືອັນຈະນຳມາຊຶ່ງຜົນປະ ໂຫຍດ ລວມທີ່ເປັນຮູບປະທຳ ໃຫ້ແກ່ບັນດາປະຊາຊາດໃນພາກພື້ນ ແລະ ໃນໂລກ.